ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 203 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 31 ກໍລະກົດ 2018

# ລັດຖະດຳລັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

### ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍ ທະບຽນຄອບຄົວ (ສະບັບປັບປຸງ)

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ, ສະບັບເລກທີ 085/ສພຊ, ລົງວັນທີ 14 ມິຖຸນາ 2018 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍ ທະບຽນຄອບຄົວ (ສະບັບປັບປຸງ);
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ, ສະບັບເລກທີ 05/ຄປຈ, ລົງວັນທີ 12 ກໍລະກົດ 2018.

ປະທານປະເທດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

ມາດຕາ 1 ປະກາດໃຊ້ກົດໝາຍວ່າດ້ວຍ ທະບຽນຄອບຄົວ (ສະບັບປັບປຸງ).

ມາດຕາ 2 ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະທານປະເທດ

ບຸນຍັງ ວໍລະຈິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 085 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 14/06/18

# ມະຕິ

## ຂອງກອງປະຊຸມສະພາແຫ່ງຊາດ

## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍທະບຽນຄອບຄົວ (ສະບັບປັບປຸງ)

---

ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງ ປີ 2015) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ VIII ໄດ້ຄົ້ນຄວ້າພິຈາລະນາ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍທະບຽນຄອບຄົວ (ສະບັບປັບປຸງ) ໃນ ວາລະກອງປະຊຸມ ຕອນບ່າຍ, ວັນທີ 14 ມິຖຸນາ 2018.

**ກອງປະຊຸມສະພາແຫ່ງຊາດ ຕົກລົງ:**

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍທະບຽນຄອບຄົວ (ສະບັບປັບປຸງ) ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານສະພາແຫ່ງຊາດ**

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 44 /ສພຊ
ນະຄອນຫຼວງວຽງຈັນ, ວັນທີ 14 ມິຖຸນາ 2018

# ກົດໝາຍ
# ວ່າດ້ວຍທະບຽນຄອບຄົວ
# (ສະບັບປັບປຸງ)

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 (ປັບປຸງ) ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຈັດຕັ້ງ, ຄຸ້ມຄອງ, ຕິດຕາມ, ກວດກາ ວຽກງານທະບຽນຄອບຄົວ ເພື່ອໃຫ້ມີຄວາມຊັດເຈນ, ຖືກຕ້ອງ ແລະ ສະໜອງຂໍ້ມູນທີ່ເປັນລະບົບ, ຮອບດ້ານ ແລະ ຄົບຖ້ວນ ແນໃສ່ປົກປ້ອງ ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ, ຮັບປະກັນຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 2 (ປັບປຸງ) ທະບຽນຄອບຄົວ**

ທະບຽນຄອບຄົວ ແມ່ນ ບັນຊີທີ່ບັນທຶກການຈົດທະບຽນຄອບຄົວ ເພື່ອຢັ້ງຢືນສະຖານະພາບ ຂອງບຸກຄົນ ຫຼື ຄອບຄົວໃດໜຶ່ງ ເປັນເອກະສານທາງການ ທີ່ຖືກຕ້ອງຕາມກົດໝາຍ.

**ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ການຈົດທະບຽນຄອບຄົວ** ໝາຍເຖິງ ການຈົດຂໍ້ມູນແຕ່ລະປະເພດທະບຽນຄອບຄົວເຂົ້າໃສ່ປຶ້ມບັນທຶກທະບຽນຄອບຄົວ;
2. **ສະຖານະພາບຂອງບຸກຄົນ** ໝາຍເຖິງ ສະພາບທາງດ້ານກົດໝາຍ ຊຶ່ງບົ່ງບອກເຖິງເອກະລັກຂອງບຸກຄົນ ເຊັ່ນ ຊື່, ນາມສະກຸນ, ທີ່ຢູ່, ເປັນໂສດ, ແຕ່ງດອງ, ເປັນຮ້າງ, ເປັນໝ້າຍ;
3. **ສະຖານະພາບຂອງຄອບຄົວ** ໝາຍເຖິງ ສາຍພົວພັນຂອງ ສະມາຊິກໃນຄອບຄົວ ເປັນຕົ້ນ ພໍ່, ແມ່, ລູກ, ຫຼານ;
4. **ປຶ້ມສຳມະໂນຄົວ** ໝາຍເຖິງ ເອກະສານທາງການ ທີ່ຢັ້ງຢືນການພັກເຊົາ, ທີ່ຢູ່ອາໄສ ທີ່ຖືກຕ້ອງຂອງ ສະມາຊິກໃນຄອບຄົວຂອງພົນລະເມືອງລາວ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ ຕາມກົດໝາຍ;

5. **ການຫາຍສາບສູນ** ໝາຍເຖິງ ການທີ່ບຸກຄົນໃດໜຶ່ງ ໄດ້ຫາຍໄປຈາກຄອບຄົວ ໂດຍບໍ່ຮູ້ບ່ອນຢູ່ ແລະ ບໍ່ຮູ້ຂ່າວຄາວເປັນເວລາ ສອງ ປີ ຂຶ້ນໄປ ຫຼື ກໍລະນີທີ່ເກີດອຸບັດຕິເຫດ ຫາກບໍ່ຮູ້ຂ່າວຄາວເປັນເວລາ ຫົກເດືອນ ຂຶ້ນໄປ ໂດຍມີຄຳຕັດສິນຂອງສານ;

6. **ການເສຍຊີວິດຕາມຄຳຕັດສິນຂອງສານ** ໝາຍເຖິງ ການທີ່ບຸກຄົນໃດໜຶ່ງໄດ້ຫາຍໄປຈາກຄອບຄົວ ໂດຍບໍ່ຮູ້ບ່ອນຢູ່ ແລະ ບໍ່ຮູ້ຂ່າວຄາວ ເປັນເວລາ ສາມປີ ໂດຍມີຄຳຕັດສິນຂອງສານ;

7. **ການປ່ຽນສັນຊາດ** ໝາຍເຖິງ ການໄດ້ສັນຊາດລາວ, ການໄດ້ສັນຊາດລາວຄືນ, ການປະສັນຊາດລາວ ແລະ ການຖອນສັນຊາດລາວຄືນ;

8. **ການຍົກຍ້າຍ** ໝາຍເຖິງ ການເຄື່ອນຍ້າຍຈາກທີ່ພັກອາໄສເດີມຂອງບຸກຄົນ ຫຼື ຄອບຄົວ ເພື່ອໄປດຳລົງຊີວິດຢູ່ບ່ອນອື່ນ;

9. **ສຳນັກງານຜູ້ຕາງໜ້າຂອງ ສປປ ລາວ** ຢູ່ຕ່າງປະເທດ ໝາຍເຖິງ ສະຖານເອກອັກຄະລັດຖະທູດ ແລະ ສະຖານກົງສຸນແຫ່ງ ສປປ ລາວ ຢູ່ ຕ່າງປະເທດ.

**ມາດຕາ 4 (ປັບປຸງ) ນະໂຍບາຍຂອງລັດກ່ຽວກັບວຽກງານທະບຽນຄອບຄົວ**

ລັດ ຊຸກຍູ້, ສົ່ງເສີມທຸກພາກສ່ວນ ເຂົ້າຮ່ວມໃນວຽກງານທະບຽນຄອບຄົວ ເພື່ອຮັບປະກັນໃຫ້ວຽກງານດັ່ງກ່າວ ດຳເນີນໄປຢ່າງຖືກຕ້ອງ, ພາວະວິໄສ, ວ່ອງໄວ, ຊັດເຈນ, ໂປ່ງໃສ, ມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ ແລະ ມີຄວາມເປັນເອກະພາບ ໃນຂອບເຂດທົ່ວປະເທດ.

ລັດ ສ້າງເງື່ອນໄຂ, ອຳນວຍຄວາມສະດວກ ດ້ວຍການສະໜອງສິ່ງຈຳເປັນ ເຊັ່ນ ງົບປະມານ, ພາຫະນະ, ອຸປະກອນ, ເຕັກໂນໂລຊີ ທີ່ທັນສະໄໝ, ສະຖານທີ່ເຮັດວຽກ ລວມທັງການສ້າງ ແລະ ພັດທະນາບຸກຄະລາກອນໃຫ້ແກ່ອົງການທະບຽນຄອບຄົວ ເພື່ອສາມາດປະຕິບັດໜ້າທີ່ວຽກງານຂອງຕົນ ຢ່າງມີປະສິດທິຜົນ.

**ມາດຕາ 5 (ປັບປຸງ) ຫຼັກການພື້ນຖານກ່ຽວກັບວຽກງານທະບຽນຄອບຄົວ**

ວຽກງານທະບຽນຄອບຄົວ ໃຫ້ປະຕິບັດຕາມຫຼັກການພື້ນຖານ ດັ່ງນີ້:

1. ເຄົາລົບ ແລະ ປະຕິບັດລັດຖະທຳມະນູນ, ກົດໝາຍ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ;
2. ດຳເນີນຢູ່ອົງການທະບຽນຄອບຄົວ ບ່ອນບຸກຄົນທີ່ກ່ຽວຂ້ອງອາໄສຢູ່ ຫຼື ພັກເຊົາຊົ່ວຄາວ;
3. ດຳເນີນໂດຍຊ່ອງໜ້າເຈົ້າໜ້າທີ່ທະບຽນຄອບຄົວ;
4. ຮັບປະກັນຄວາມຖືກຕ້ອງຕາມຕົວຈິງ, ພາວະວິໄສ, ຄົບຖ້ວນ, ຊັດເຈນ, ສະດວກ, ວ່ອງໄວ, ໂປ່ງໃສ;
5. ປະສານສົມທົບກັບບຸກຄົນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອໃຫ້ໄດ້ຂໍ້ມູນໃນການຈົດທະບຽນຄອບຄົວ ຢ່າງຖືກຕ້ອງ ແລະ ຄົບຖ້ວນ;
6. ຄຸ້ມຄອງຂໍ້ມູນລວມສູນ ແລະ ຮັກສາໄວ້ຕະຫຼອດໄປ.

**ມາດຕາ 6 (ປັບປຸງ) ພັນທະຂອງພົນລະເມືອງ ກ່ຽວກັບວຽກງານທະບຽນຄອບຄົວ**

ພົນລະເມືອງທຸກຄົນ ມີພັນທະໃນການເຄົາລົບ ແລະ ປະຕິບັດວຽກງານທະບຽນຄອບຄົວ ຕາມກົດໝາຍ.

**ມາດຕາ 7 (ປັບປຸງ) ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບພົນລະເມືອງລາວ, ຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ອາໄສ ຫຼື ດຳລົງຊີວິດ ຢູ່ ສປປ ລາວ ແລະ ພົນລະເມືອງລາວ ທີ່ອາໄສ ຫຼື ດຳລົງຊີວິດຢູ່ຕ່າງປະເທດ.

**ມາດຕາ 8 (ປັບປຸງ) ການຮ່ວມມືສາກົນ**

ລັດ ສົ່ງເສີມໃຫ້ມີການພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານທະບຽນຄອບຄົວ ດ້ວຍການແລກປ່ຽນບົດຮຽນທາງດ້ານເຕັກນິກ, ວິຊາການ, ຂໍ້ມູນ ຂ່າວສານ, ການຝຶກອົບຮົມ ແລະ ພັດທະນາຊັບພະຍາກອນມະນຸດ ເພື່ອໃຫ້ວຽກງານດັ່ງກ່າວ ມີປະສິດທິຜົນ ແລະ ທັນສະໄໝ, ປະຕິບັດຕາມສົນທິສັນຍາ ແລະ ສັນຍາສາກົນທີ່ ສປປ ລາວ ເປັນພາຄີ.

## ພາກທີ II
## ວຽກງານທະບຽນຄອບຄົວ
### ໝວດທີ 1
### ປະເພດ ແລະ ຂັ້ນຕອນ ການຈົດທະບຽນຄອບຄົວ

**ມາດຕາ 9 (ປັບປຸງ) ປະເພດການຈົດທະບຽນຄອບຄົວ**

ການຈົດທະບຽນຄອບຄົວ ແບ່ງອອກເປັນປະເພດ ດັ່ງນີ້:

1. ການຈົດທະບຽນການເກີດ;
2. ການຈົດທະບຽນການແຕ່ງດອງ;
3. ການຈົດທະບຽນການຢ່າຮ້າງ;
4. ການຈົດທະບຽນການປ່ຽນ ຊື່ ຫຼື ນາມສະກຸນ;
5. ການຈົດທະບຽນການປ່ຽນສັນຊາດ;
6. ການຈົດທະບຽນການເສຍຊີວິດ;
7. ການຈົດທະບຽນການຍົກຍ້າຍ;
8. ການຈົດທະບຽນສຳມະໂນຄົວ;
9. ການອອກບັດປະຈຳຕົວ;
10. ການຈົດທະບຽນການພັກເຊົາຊົ່ວຄາວ;
11. ການຈົດທະບຽນການແຕ່ງຕັ້ງຜູ້ປົກຄອງ;
12. ການຈົດທະບຽນການເອົາເດັກເປັນລູກລ້ຽງ;
13. ການຈົດທະບຽນການຮັບຮູ້ການເປັນພໍ່ ຫຼື ແມ່;
14. ການຈົດທະບຽນການຫາຍສາບສູນ.

**ມາດຕາ 10 ຂັ້ນຕອນການຈົດທະບຽນຄອບຄົວ**

ການຈົດທະບຽນຄອບຄົວ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ການຍື່ນຄໍາຮ້ອງຂໍຈົດທະບຽນ;
2. ການພິຈາລະນາການຈົດທະບຽນ;
3. ການເກັບຮັກສາເອກະສານຈົດທະບຽນ.

**ມາດຕາ 11 (ປັບປຸງ) ການຍື່ນຄໍາຮ້ອງຂໍຈົດທະບຽນ**

ບຸກຄົນ ຫຼື ຄອບຄົວ ທີ່ມີຈຸດປະສົງຂໍຈົດທະບຽນຄອບຄົວ ຕ້ອງຍື່ນຄໍາຮ້ອງຕໍ່ອົງການທະບຽນຄອບຄົວຂອງຂະແໜງການພາຍໃນ, ຂະແໜງການປ້ອງກັນຄວາມສະຫງົບ, ຂະແໜງການຍຸຕິທໍາ ແລະ ຂະແໜງການການຕ່າງປະເທດທີ່ກ່ຽວຂ້ອງ ໂດຍຜ່ານອົງການປົກຄອງບ້ານບ່ອນຕົນອາໄສຢູ່ ຍົກເວັ້ນການຈົດທະບຽນ ການປ່ຽນສັນຊາດ, ການຫາຍສາບສູນ, ການຍົກຍ້າຍ ແລະ ການຢ່າຮ້າງຕາມຄໍາຕັດສິນຂອງສານ.

ສໍາລັບບຸກຄົນ ຫຼື ຄອບຄົວ ທີ່ຢູ່ເຂດຫ່າງໄກ, ສອກຫຼີກ ຈາກຕົວເມືອງ ໃຫ້ສະເໜີຕໍ່ອົງການປົກຄອງບ້ານບ່ອນຕົນອາໄສຢູ່ ແລ້ວອົງການປົກຄອງບ້ານນໍາສະເໜີຕໍ່ອົງການທະບຽນຄອບຄົວຂັ້ນເມືອງ ຈົດທະບຽນ ແລະ ອອກໃບຢັ້ງຢືນ.

ໃນກໍລະນີຈໍາເປັນ ອາດຈັດຕັ້ງໃຫ້ມີໜ່ວຍຈົດທະບຽນຄອບຄົວເຄື່ອນທີ່ກໍໄດ້.

**ມາດຕາ 12 (ປັບປຸງ) ການພິຈາລະນາການຈົດທະບຽນ**

ພາຍຫຼັງທີ່ໄດ້ຮັບຄໍາຮ້ອງຂໍຈົດທະບຽນແລ້ວ ອົງການທະບຽນຄອບຄົວທີ່ກ່ຽວຂ້ອງ ຕ້ອງພິຈາລະນາຄໍາຮ້ອງດັ່ງກ່າວຕາມແຕ່ລະກໍລະນີ ແຕ່ສູງສຸດບໍ່ໃຫ້ເກີນ ສາມສິບວັນ ນັບແຕ່ວັນໄດ້ຮັບຄໍາຮ້ອງ ເປັນຕົ້ນໄປ.

ຄໍາຮ້ອງຂໍຈົດທະບຽນ ແລະ ການຈົດທະບຽນນັ້ນ ໃຫ້ປະຕິບັດຕາມລະບຽບການຈົດທະບຽນຄອບຄົວ ຊຶ່ງກະຊວງພາຍໃນ, ກະຊວງປ້ອງກັນຄວາມສະຫງົບ, ກະຊວງຍຸຕິທໍາ ແລະ ກະຊວງການຕ່າງປະເທດ ເປັນຜູ້ວາງອອກ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ.

**ມາດຕາ 13 (ປັບປຸງ) ການເກັບຮັກສາເອກະສານຈົດທະບຽນ**

ການຈົດທະບຽນຄອບຄົວ ຕ້ອງເກັບຮັກສາໄວ້ຢູ່ອົງການທະບຽນຄອບຄົວບ່ອນຈົດທະບຽນນັ້ນ. ໃນການເກັບຮັກສາເອກະສານຈົດທະບຽນດັ່ງກ່າວ ເຈົ້າໜ້າທີ່ທະບຽນຄອບຄົວ ຕ້ອງຈັດປະເພດເອກະສານທີ່ນໍາມາຈົດທະບຽນ ແລະ ເກັບໄວ້ຢ່າງເປັນລະບົບ, ບໍ່ໃຫ້ຕົກເຮ່ຍເສຍຫາຍ ຫຼື ຖືກທໍາລາຍ ພ້ອມທັງບັນທຶກຂໍ້ມູນກ່ຽວກັບການຈົດທະບຽນເຂົ້າໃນຖານຂໍ້ມູນທະບຽນຄອບຄົວເອເລັກໂຕຣນິກ.

## ໝວດທີ 2
## ການຈົດທະບຽນຄອບຄົວ

**ມາດຕາ 14 (ປັບປຸງ) ການແຈ້ງເກີດ**

ເມື່ອມີເດັກເກີດຢູ່ໂຮງໝໍ ຫຼື ສະຖານທີ່ບໍລິການປິ່ນປົວອື່ນ ໃຫ້ສະຖານທີ່ດັ່ງກ່າວອອກໃບແຈ້ງເກີດ ພາຍໃນເວລາ ເຈັດວັນ ນັບແຕ່ວັນເດັກເກີດເປັນຕົ້ນໄປ ແລ້ວໃຫ້ພໍ່, ແມ່ ຫຼື ຜູ້ຕາງໜ້າຄອບຄົວໄປແຈ້ງຕໍ່ອົງການປົກຄອງບ້ານ ເພື່ອຮັບຮູ້ກ່ອນໄປແຈ້ງຈົດທະບຽນການເກີດ.

ໃນກໍລະນີທີ່ເດັກເກີດຢູ່ນອກ ໂຮງໝໍ ຫຼື ສະຖານທີ່ບໍລິການປິ່ນປົວອື່ນ ເປັນຕົ້ນ ຢູ່ເຮືອນ, ນາ, ໄຮ່, ສວນ ໃຫ້ ພໍ່, ແມ່ ຫຼື ຜູ້ຕາງໜ້າຄອບຄົວ ໄປແຈ້ງຕໍ່ອົງການປົກຄອງບ້ານບ່ອນຕົນອາໄສຢູ່ ພາຍໃນເວລາ ສິບຫ້າວັນ ນັບແຕ່ວັນເດັກເກີດ ເປັນຕົ້ນໄປ.

ບຸກຄົນທີ່ໄດ້ພົບເຫັນເດັກເກີດໃໝ່ ທີ່ຖືກປະຖິ້ມໄວ້ ຕ້ອງໃຫ້ການຊ່ວຍເຫຼືອ ແລະ ໃຫ້ໄປແຈ້ງຕໍ່ອົງການປົກຄອງບ້ານ ຫຼື ເຈົ້າໜ້າທີ່ຕຳຫຼວດໃນເຂດບ່ອນຕົນພົບເຫັນເດັກນັ້ນໂດຍໄວ.

ເມື່ອໄດ້ຮັບການແຈ້ງຕາມວັກ 2 ແລະ 3 ເທິງນີ້ແລ້ວ ນາຍບ້ານຕ້ອງອອກໃບແຈ້ງເກີດພາຍໃນເວລາ ເຈັດວັນ ນັບແຕ່ວັນໄດ້ຮັບແຈ້ງ ເປັນຕົ້ນໄປ.

ເມື່ອໄດ້ຮັບໃບແຈ້ງເກີດແລ້ວ ພໍ່, ແມ່ ຫຼື ຜູ້ຕາງໜ້າຄອບຄົວ ຫຼື ພາກສ່ວນທີ່ເບິ່ງແຍງດູແລເດັກຊົ່ວຄາວນັ້ນ ຕ້ອງໄປແຈ້ງຈົດທະບຽນການເກີດຢູ່ຫ້ອງການພາຍໃນຂັ້ນເມືອງ ບ່ອນຕົນອາໄສຢູ່ ຫຼື ພັກເຊົາຊົ່ວຄາວ ພາຍໃນເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບໃບແຈ້ງເກີດ ຫຼື ວັນຮັບເອົາເດັກໄປລ້ຽງ ເປັນຕົ້ນໄປ.

ສຳລັບເດັກທີ່ເກີດຢູ່ຕ່າງປະເທດນັ້ນ ໃຫ້ພໍ່, ແມ່ ຫຼື ຜູ້ຕາງໜ້າຄອບຄົວ ໄປແຈ້ງຕໍ່ໜ່ວຍງານທະບຽນຄອບຄົວຢູ່ສຳນັກງານຜູ້ຕາງໜ້າຂອງ ສປປ ລາວ ຢູ່ຕ່າງປະເທດ ຢູ່ປະເທດບ່ອນເດັກເກີດ.

**ມາດຕາ 15 (ປັບປຸງ) ການຈົດທະບຽນການເກີດ**

ການຈົດທະບຽນການເກີດ ມີຄວາມສຳຄັນໃນການເກັບກຳສະຖິຕິການເກີດຂອງເດັກ, ການເພີ່ມຂຶ້ນ ຂອງສະມາຊິກຄອບຄົວ ແລະ ພົນລະເມືອງ, ນຳໃຊ້ເປັນຫຼັກຖານທາງກົດໝາຍໃນການເຂົ້າເຖິງການບໍລິການຂັ້ນພື້ນຖານ ພ້ອມທັງເປັນຂໍ້ມູນໃຫ້ແກ່ການສ້າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ.

ການຈົດທະບຽນການເກີດ ໃຫ້ດຳເນີນຢູ່ ຫ້ອງການພາຍໃນຂັ້ນເມືອງ, ໜ່ວຍງານທະບຽນຄອບຄົວຢູ່ສຳນັກງານຜູ້ຕາງໜ້າຂອງ ສປປ ລາວ ຢູ່ຕ່າງປະເທດ, ເມື່ອໄດ້ຮັບເອກະສານການແຈ້ງເກີດແລ້ວ ຕ້ອງຈົດເນື້ອໃນການແຈ້ງເກີດ ແລະ ເລກລະຫັດບຸກຄົນເຂົ້າປຶ້ມທະບຽນຄອບຄົວ, ບັນທຶກເຂົ້າໃນຖານຂໍ້ມູນທະບຽນຄອບຄົວເອເລັກໂຕຣນິກ ແລະ ອອກໃບຢັ້ງຢືນການເກີດ ພາຍໃນເວລາ ຫ້າວັນ ລັດຖະການ ນັບແຕ່ວັນໄດ້ຮັບການແຈ້ງຂໍຈົດທະບຽນການເກີດ ເປັນຕົ້ນໄປ.

ພາຍຫຼັງໄດ້ຮັບໃບຢັ້ງຢືນການເກີດແລ້ວ ໃຫ້ໄປຈົດເຂົ້າປຶ້ມທະບຽນສຳມະໂນຄົວ ຢູ່ກອງບັນຊາການປ້ອງກັນຄວາມສະຫງົບຂັ້ນເມືອງ ບ່ອນຕົນອາໄສຢູ່.

**ມາດຕາ 16 (ປັບປຸງ) ການຈົດທະບຽນການແຕ່ງດອງ**

ການຈົດທະບຽນການແຕ່ງດອງ ມີຄວາມສຳຄັນໃນການເກັບກຳສະຖິຕິ ກ່ຽວກັບການສ້າງຄອບຄົວ ແລະ ເປັນການຢັ້ງຢືນສະຖານະພາບການມີຄອບຄົວແລ້ວ ລວມທັງການຮັກສາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ.

ການຈົດທະບຽນການແຕ່ງດອງ ລະຫ່ວາງພົນລະເມືອງລາວ ຢູ່ ສປປ ລາວ ໃຫ້ດຳເນີນຢູ່ຫ້ອງການພາຍໃນຂັ້ນເມືອງ ບ່ອນຄູ່ບ່າວສາວອາໄສຢູ່ ຫຼື ບ່ອນຢູ່ ຂອງຝ່າຍໃດຝ່າຍໜຶ່ງ.

ສຳລັບການຈົດທະບຽນການແຕ່ງດອງ ລະຫວ່າງພົນລະເມືອງລາວຢູ່ຕ່າງປະເທດ ໃຫ້ດຳເນີນຢູ່ໜ່ວຍງານທະບຽນຄອບຄົວສຳນັກງານຜູ້ຕາງໜ້າ ຂອງ ສປປ ລາວ ຢູ່ຕ່າງປະເທດ.

ສຳລັບການຈົດທະບຽນການແຕ່ງດອງ ລະຫວ່າງພົນລະເມືອງລາວ ກັບຄົນຕ່າງດ້າວ, ຄົນຕ່າງປະເທດ ຫຼື ຄົນບໍ່ມີສັນຊາດຢູ່ ສປປ ລາວ ໃຫ້ດຳເນີນຢູ່ພະແນກພາຍໃນຂັ້ນແຂວງ ບ່ອນຄູ່ບ່າວສາວອາໄສຢູ່ ຫຼື ບ່ອນຢູ່ ຂອງຝ່າຍໃດຝ່າຍໜຶ່ງ.

ສຳລັບການຈົດທະບຽນການແຕ່ງດອງ ລະຫວ່າງຄົນຕ່າງດ້າວ, ຄົນຕ່າງປະເທດ ຫຼື ຄົນບໍ່ມີສັນຊາດດ້ວຍກັນຢູ່ ສປປ ລາວ ໃຫ້ດຳເນີນຢູ່ ພະແນກພາຍໃນຂັ້ນແຂວງ ບ່ອນຄູ່ບ່າວສາວອາໄສຢູ່ ຫຼື ບ່ອນຢູ່ຂອງຝ່າຍໃດຝ່າຍໜຶ່ງ ຫຼື ດຳເນີນຢູ່ສະຖານທູດ ຫຼື ສະຖານກົງສຸນຂອງປະເທດທີ່ກ່ຽວຂ້ອງ ປະຈຳ ສປປ ລາວ.

ສຳລັບການຈົດທະບຽນການແຕ່ງດອງ ລະຫວ່າງພົນລະເມືອງລາວ ກັບ ຄົນຕ່າງດ້າວ, ຄົນຕ່າງປະເທດ ຫຼື ຄົນບໍ່ມີສັນຊາດ ຢູ່ຕ່າງປະເທດ ໃຫ້ດຳເນີນຢູ່ໜ່ວຍງານທະບຽນຄອບຄົວສຳນັກງານຜູ້ຕາງໜ້າຂອງ ສປປ ລາວ ຢູ່ຕ່າງປະເທດ ຫຼື ປະຕິບັດຕາມກົດໝາຍຂອງປະເທດທີ່ຕົນອາໄສຢູ່.

ຫ້ອງການພາຍໃນຂັ້ນເມືອງ, ພະແນກພາຍໃນຂັ້ນແຂວງ ແລະ ໜ່ວຍງານທະບຽນຄອບຄົວສຳນັກງານຜູ້ຕາງໜ້າ ຂອງ ສປປ ລາວ ຢູ່ຕ່າງປະເທດ ຕ້ອງຈົດທະບຽນການແຕ່ງດອງໂດຍຊ້ອງໜ້າຄູ່ບ່າວສາວ ແລະ ອອກໃບຢັ້ງຢືນການແຕ່ງດອງ ພາຍໃນເວລາ ຫ້າວັນ ລັດຖະການ ນັບແຕ່ວັນໄດ້ຮັບຄຳຮ້ອງ ເປັນຕົ້ນໄປ.

**ມາດຕາ 17 (ປັບປຸງ) ການຈົດທະບຽນການຢ່າຮ້າງ**

ການຈົດທະບຽນການຢ່າຮ້າງ ມີຄວາມສຳຄັນໃນການເກັບກຳສະຖິຕິກ່ຽວກັບການຢ່າຮ້າງກັນລະຫວ່າງຜົວເມຍ ແລະ ເປັນການຢັ້ງຢືນເຖິງຄວາມເປັນໂສດຂອງຄູ່ຜົວເມຍ ແລະ ສາມາດແຕ່ງດອງໃໝ່ໄດ້.

ການຢ່າຮ້າງດ້ວຍຄວາມສະໝັກໃຈ ແລະ ການຢ່າຮ້າງຕາມຄຳຕັດສິນຂອງສານ ຕ້ອງນຳໄປຈົດທະບຽນຢູ່ຫ້ອງການພາຍໃນຂັ້ນເມືອງ ບ່ອນຄູ່ຜົວເມຍອາໄສຢູ່ ກ່ອນການຢ່າຮ້າງ.

ສຳລັບການຈົດທະບຽນການຢ່າຮ້າງ ລະຫວ່າງພົນລະເມືອງລາວ ກັບຄົນຕ່າງດ້າວ, ຄົນຕ່າງປະເທດ ຫຼື ຄົນບໍ່ມີສັນຊາດ ໃຫ້ດຳເນີນຢູ່ພະແນກພາຍໃນຂັ້ນແຂວງ ບ່ອນຄູ່ຜົວເມຍອາໄສຢູ່ ກ່ອນການຢ່າຮ້າງ.

ສຳລັບການຈົດທະບຽນການຢ່າຮ້າງ ລະຫວ່າງພົນລະເມືອງລາວດ້ວຍກັນ ຫຼື ພົນລະເມືອງລາວ ກັບ ຄົນຕ່າງດ້າວ, ຄົນຕ່າງປະເທດ ຫຼື ຄົນບໍ່ມີສັນຊາດ ຢູ່ຕ່າງປະເທດ ໃຫ້ດຳເນີນຢູ່ໜ່ວຍງານທະບຽນຄອບຄົວສຳນັກງານຜູ້ຕາງໜ້າ ຂອງ ສປປ ລາວ ຢູ່ຕ່າງປະເທດ ຫຼື ປະຕິບັດຕາມກົດໝາຍຂອງປະເທດ ທີ່ຕົນອາໄສຢູ່.

ຫ້ອງການພາຍໃນຂັ້ນເມືອງ, ພະແນກພາຍໃນຂັ້ນແຂວງ ແລະ ໜ່ວຍງານທະບຽນຄອບຄົວສຳນັກງານຜູ້ຕາງໜ້າ ຂອງ ສປປ ລາວ ຢູ່ຕ່າງປະເທດ ຕ້ອງຈົດທະບຽນໂດຍຊ້ອງໜ້າຄູ່ຜົວເມຍ ແລະ ອອກໃບຢັ້ງຢືນການຢ່າຮ້າງໃຫ້ຜູ້ລະສະບັບ ພາຍໃນເວລາ ຫ້າວັນ ລັດຖະການ ນັບແຕ່ວັນໄດ້ຮັບຄຳຮ້ອງ ເປັນຕົ້ນໄປ.

**ມາດຕາ 18 (ປັບປຸງ) ການຈົດທະບຽນການປ່ຽນ ຊື່ ຫຼື ນາມສະກຸນ**

ການຈົດທະບຽນການປ່ຽນ ຊື່ ຫຼື ນາມສະກຸນ ມີຄວາມສຳຄັນໃນການຢັ້ງຢືນເຫດຜົນ ຄວາມຈຳເປັນ ໃນການປ່ຽນ ຊື່ ຫຼື ນາມສະກຸນໃໝ່, ຈຳກັດການປ່ຽນ ຊື່ ຫຼື ນາມສະກຸນຂອງບຸກຄົນ ເພື່ອເຄື່ອນໄຫວທີ່ບໍ່ຖືກຕ້ອງຕາມກົດໝາຍ ຫຼື ຫຼົບຫຼີກຄວາມຮັບຜິດຊອບຕໍ່ການກະທຳຜິດ.

ການຈົດທະບຽນການປ່ຽນ ຊື່ ຫຼື ນາມສະກຸນ ໃຫ້ດໍາເນີນຢູ່ຫ້ອງການພາຍໃນຂັ້ນເມືອງ ບ່ອນຜູ້ຮ້ອງຂໍອາໄສຢູ່.

ຫ້ອງການພາຍໃນຂັ້ນເມືອງດັ່ງກ່າວ ຕ້ອງພິຈາລະນາຈົດທະບຽນ ແລະ ອອກໃບຢັ້ງຢືນການປ່ຽນ ຊື່ ຫຼື ນາມສະກຸນ ພາຍໃນເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບຄໍາຮ້ອງ ເປັນຕົ້ນໄປ ແລ້ວແຈ້ງໃຫ້ກອງບັນຊາການປ້ອງກັນຄວາມສະຫງົບຂັ້ນເມືອງ ເພື່ອປ່ຽນແປງສໍາມະໂນຄົວ ແລະ ບັດປະຈໍາຕົວ ຕາມການຮ້ອງຂໍ.

## ມາດຕາ 19 (ປັບປຸງ) ການຈົດທະບຽນການປ່ຽນສັນຊາດ

ການຈົດທະບຽນການປ່ຽນສັນຊາດ ມີຄວາມສໍາຄັນໃນການຢັ້ງຢືນການປ່ຽນສັນຊາດ ແນໃສ່ຄຸ້ມຄອງ ແລະ ອໍານວຍຄວາມສະດວກໃນການດໍາລົງຊີວິດຂອງບຸກຄົນທີ່ປ່ຽນສັນຊາດ.

ພາຍຫຼັງໄດ້ຮັບແຈ້ງການຂອງຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ກ່ຽວກັບການປ່ຽນສັນຊາດແລ້ວ ໃຫ້ຈົດທະບຽນການປ່ຽນສັນຊາດ ຢູ່ກົມຄຸ້ມຄອງພົນລະເມືອງ ກະຊວງພາຍໃນ.

ກົມດັ່ງກ່າວຕ້ອງຈົດທະບຽນ ແລະ ອອກໃບຢັ້ງຢືນການປ່ຽນສັນຊາດ ພາຍໃນເວລາ ຫ້າວັນລັດຖະການ ນັບແຕ່ວັນໄດ້ຮັບຄໍາຮ້ອງຂໍຈົດທະບຽນ ເປັນຕົ້ນໄປ.

ຫຼັງຈາກໄດ້ໃບຢັ້ງຢືນການປ່ຽນສັນຊາດແລ້ວ ໃຫ້ແຈ້ງຕໍ່ຂະແໜງການປ້ອງກັນຄວາມສະຫງົບເພື່ອປ່ຽນແປງສໍາມະໂນຄົວ ແລະ ບັດປະຈໍາຕົວ ຕາມການຮ້ອງຂໍ.

ສໍາລັບຜູ້ຮ້ອງຂໍປະສັນຊາດລາວ ທີ່ອາໄສຢູ່ຕ່າງປະເທດ ໃຫ້ຈົດທະບຽນຢູ່ ໜ່ວຍງານທະບຽນຄອບຄົວສໍານັກງານຜູ້ຕາງໜ້າຂອງ ສປປ ລາວ ຢູ່ຕ່າງປະເທດ.

## ມາດຕາ 20 (ປັບປຸງ) ການແຈ້ງເສຍຊີວິດ

ເມື່ອມີບຸກຄົນໃດໜຶ່ງ ຫາກເສຍຊີວິດຢູ່ ໂຮງໝໍ ຫຼື ສະຖານທີ່ບໍລິການປິ່ນປົວອື່ນ ໃຫ້ສະຖານທີ່ດັ່ງກ່າວ ອອກໃບແຈ້ງເສຍຊີວິດ ພາຍໃນເວລາ ຫ້າວັນ ລັດຖະການ ນັບແຕ່ວັນເສຍຊີວິດ ເປັນຕົ້ນໄປ ແລ້ວໃຫ້ຜູ້ຕາງໜ້າຄອບຄົວໄປແຈ້ງຕໍ່ອົງການປົກຄອງບ້ານ ເພື່ອຮັບຮູ້ ກ່ອນໄປແຈ້ງຈົດທະບຽນການເສຍຊີວິດ.

ໃນກໍລະນີມີບຸກຄົນໃດໜຶ່ງ ຫາກເສຍຊີວິດຢູ່ນອກ ໂຮງໝໍ ຫຼື ສະຖານທີ່ບໍລິການປິ່ນປົວອື່ນ ເປັນຕົ້ນ ຢູ່ເຮືອນ, ນາ, ໄຮ່, ສວນ ໃຫ້ຜູ້ຕາງໜ້າຄອບຄົວໄປແຈ້ງຕໍ່ອົງການປົກຄອງບ້ານ ບ່ອນບຸກຄົນເສຍຊີວິດ ພາຍໃນເວລາ ຫ້າວັນ ລັດຖະການ ນັບແຕ່ວັນເສຍຊີວິດ ເປັນຕົ້ນໄປ.

ບຸກຄົນໃດ ທີ່ໄດ້ປິ່ນປົວຄົນເຈັບ ຫຼື ໄດ້ທໍາການຊ່ວຍອອກລູກ ຕາມວິຊາຊີບຂອງຕົນແລ້ວຄົນເຈັບ ຫຼື ເດັກທີ່ເກີດມາໃໝ່ນັ້ນ ຫາກໄດ້ເສຍຊີວິດ ບຸກຄົນນັ້ນຕ້ອງອອກໃບແຈ້ງເສຍຊີວິດໃນທັນໃດ.

ຖ້າວ່າບຸກຄົນໃດໜຶ່ງ ຫາກໄດ້ພົບເຫັນຊາກສົບ ຕ້ອງແຈ້ງຕໍ່ອົງການປົກຄອງບ້ານ ແລະ ເຈົ້າໜ້າທີ່ຕໍາຫຼວດ ບ່ອນທີ່ໃກ້ສຸດໃນທັນໃດ.

ເມື່ອໄດ້ຮັບແຈ້ງເສຍຊີວິດແລ້ວ ນາຍບ້ານ ຕ້ອງອອກໃບແຈ້ງເສຍຊີວິດ ພາຍໃນເວລາ ຫ້າວັນລັດຖະການ ນັບແຕ່ວັນໄດ້ຮັບແຈ້ງ ເປັນຕົ້ນໄປ. ໃນກໍລະນີທີ່ສາເຫດຂອງການເສຍຊີວິດ ຫາກບໍ່ຈະແຈ້ງ ຫຼື ການເສຍຊີວິດ ຍ້ອນພະຍາດຕິດແປດ ທີ່ເປັນອັນຕະລາຍ ກໍໃຫ້ແຈ້ງຕໍ່ເຈົ້າໜ້າທີ່ຕໍາຫຼວດ ຫຼື ເຈົ້າໜ້າທີ່ສາທາລະນະສຸກ ໂດຍດ່ວນ ແລະ ໃຫ້ໂຈະການອອກໃບແຈ້ງເສຍຊີວິດ ຈົນກວ່າຈະໄດ້ຮັບຄໍາເຫັນຈາກເຈົ້າໜ້າທີ່ທີ່ກ່ຽວຂ້ອງດັ່ງກ່າວ. ຖ້າຜູ້ເສຍຊີວິດ ຫາກເປັນຄົນຕ່າງດ້າວ, ຄົນຕ່າງປະເທດນັ້ນ ເຈົ້າໜ້າທີ່ຕໍາຫຼວດ ຕ້ອງແຈ້ງໃຫ້ກະຊວງການຕ່າງປະເທດໂດຍໄວ.

ພາຍຫຼັງໄດ້ຮັບໃບແຈ້ງເສຍຊີວິດແລ້ວ ໃຫ້ຜູ້ຕາງໜ້າຄອບຄົວໄປແຈ້ງຈົດທະບຽນການເສຍຊີວິດ ຢູ່ຫ້ອງການພາຍໃນຂັ້ນເມືອງບ່ອນຕົນອາໄສຢູ່ ຫຼື ພັກເຊົາຊົ່ວຄາວ ພາຍໃນເວລາ ສິບຫ້າວັນ ນັບແຕ່ວັນໄດ້ຮັບໃບແຈ້ງເສຍຊີວິດ ເປັນຕົ້ນໄປ.

ໃນກໍລະນີຜູ້ເສຍຊີວິດບໍ່ມີຍາດພີ່ນ້ອງນັ້ນ ໃຫ້ຜູ້ຕາງໜ້າອົງການ, ການຈັດຕັ້ງ ຫຼື ບຸກຄົນທີ່ກ່ຽວຂ້ອງໄປຈົດທະບຽນການເສຍຊີວິດ.

**ມາດຕາ 21 (ປັບປຸງ) ການແຈ້ງການເສຍຊີວິດຕາມຄຳຕັດສິນຂອງສານ**

ຖ້າວ່າບຸກຄົນໃດ ຫາກຖືກສານຕັດສິນວ່າເປັນຜູ້ເສຍຊີວິດ ໃຫ້ຜູ້ຕາງໜ້າຄອບຄົວຂອງບຸກຄົນນັ້ນ ໄປແຈ້ງຕໍ່ຫ້ອງການພາຍໃນຂັ້ນເມືອງບ່ອນຕົນອາໄສຢູ່ ຫຼື ພັກເຊົາຊົ່ວຄາວ ພາຍໃນເວລາ ຫ້າວັນ ລັດຖະການ ນັບແຕ່ວັນຮັບຊາບຄຳຕັດສິນຂອງສານ ເປັນຕົ້ນໄປ.

**ມາດຕາ 22 (ໃໝ່) ການຈົດທະບຽນການເສຍຊີວິດ**

ການຈົດທະບຽນການເສຍຊີວິດ ມີຄວາມສຳຄັນໃຫ້ແກ່ການເປີດການສືບທອດມູນມໍຣະດົກ ລວມທັງເປັນການເກັບກຳສະຖິຕິການເສຍຊີວິດຂອງພົນລະເມືອງ.

ການຈົດທະບຽນການເສຍຊີວິດ ໃຫ້ດຳເນີນຢູ່ຫ້ອງການພາຍໃນຂັ້ນເມືອງ, ໜ່ວຍງານທະບຽນຄອບຄົວສຳນັກງານຜູ້ຕາງໜ້າຂອງ ສປປ ລາວ ຢູ່ຕ່າງປະເທດ ພາຍຫຼັງໄດ້ຮັບເອກະສານການແຈ້ງເສຍຊີວິດແລ້ວ ຕ້ອງຈົດເນື້ອໃນການແຈ້ງເສຍຊີວິດເຂົ້າໃສ່ປຶ້ມທະບຽນຄອບຄົວ ແລະ ບັນທຶກເຂົ້າໃນຖານຂໍ້ມູນທະບຽນຄອບຄົວເອເລັກໂຕຣນິກ ແລະ ອອກໃບຢັ້ງຢືນການເສຍຊີວິດ ພາຍໃນເວລາ ຫ້າວັນ ລັດຖະການ ນັບແຕ່ວັນໄດ້ຮັບການແຈ້ງເສຍຊີວິດ ເປັນຕົ້ນໄປ.

ພາຍຫຼັງໄດ້ຮັບໃບຢັ້ງຢືນການເສຍຊີວິດແລ້ວ ໃຫ້ໄປແຈ້ງຕໍ່ກອງບັນຊາການປ້ອງກັນຄວາມສະຫງົບຂັ້ນເມືອງ ບ່ອນຜູ້ເສຍຊີວິດໄດ້ຂຶ້ນທະບຽນສຳມະໂນຄົວ ເພື່ອປ່ຽນແປງປຶ້ມສຳມະໂນຄົວ.

**ມາດຕາ 23 (ປັບປຸງ) ການແຈ້ງຍົກຍ້າຍ**

ບຸກຄົນ ຫຼື ຄອບຄົວ ທີ່ມີຈຸດປະສົງຍົກຍ້າຍບ້ານຕໍ່ບ້ານໃນ ເມືອງ, ເທດສະບານ, ນະຄອນດຽວກັນ ໃຫ້ຜູ້ຍົກຍ້າຍ ຫຼື ຜູ້ຕາງໜ້າຄອບຄົວ ຂໍໃບຢັ້ງຢືນຮັບປະກັນຈາກບ້ານທີ່ຈະໄປຢູ່ໃໝ່ ແລ້ວປະກອບເອກະສານຜ່ານອົງການປົກຄອງບ້ານເດີມຂອງຕົນ, ຈາກນັ້ນ ສະເໜີກອງບັນຊາການປ້ອງກັນຄວາມສະຫງົບຂັ້ນເມືອງ ເພື່ອພິຈາລະນາອອກໃບຍົກຍ້າຍ ພາຍໃນເວລາ ຫ້າວັນ ລັດຖະການ ນັບແຕ່ວັນໄດ້ຮັບເອກະສານ ເປັນຕົ້ນໄປ.

ໃນກໍລະນີຍົກຍ້າຍລະດັບເມືອງຕໍ່ເມືອງ ພາຍໃນແຂວງດຽວກັນ ຫຼື ໄປແຂວງອື່ນ ໃຫ້ຜູ້ຍົກຍ້າຍ ຫຼື ຜູ້ຕາງໜ້າຄອບຄົວ ຂໍໃບຢັ້ງຢືນຮັບປະກັນຈາກ ນາຍບ້ານ ແລະ ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ບ່ອນທີ່ຈະໄປຢູ່ໃໝ່ ແລ້ວປະກອບເອກະສານຜ່ານອົງການປົກຄອງບ້ານ, ຈາກນັ້ນສະເໜີກອງບັນຊາການປ້ອງກັນຄວາມສະຫງົບຂັ້ນເມືອງບ່ອນຢູ່ເກົ່າ ເພື່ອພິຈາລະນາອອກໃບຍົກຍ້າຍ ພາຍໃນເວລາ ສິບວັນ ນັບແຕ່ວັນໄດ້ຮັບເອກະສານ ເປັນຕົ້ນໄປ. ສຳລັບການຍົກຍ້າຍໄປແຂວງອື່ນ ກອງບັນຊາການປ້ອງກັນຄວາມສະຫງົບຂັ້ນເມືອງບ່ອນຢູ່ເກົ່າ ຕ້ອງລາຍງານໃຫ້ກອງບັນຊາການປ້ອງກັນຄວາມສະຫງົບຂັ້ນແຂວງ ພາຍໃນເວລາ ສາມວັນ ລັດຖະການ ນັບແຕ່ວັນອອກໃບຍົກຍ້າຍ ເປັນຕົ້ນໄປ.

ພາຍຫຼັງກອງບັນຊາການປ້ອງກັນຄວາມສະຫງົບຂັ້ນເມືອງ ອະນຸຍາດໃຫ້ຍົກຍ້າຍແລ້ວ ຕ້ອງແຈ້ງຕໍ່ຫ້ອງການພາຍໃນຂັ້ນເມືອງ ພາຍໃນເວລາ ສາມວັນ ລັດຖະການ ເພື່ອຈົດທະບຽນການຍົກຍ້າຍ.

**ມາດຕາ 24 (ປັບປຸງ) ການຈົດທະບຽນການຍົກຍ້າຍ**

ການຈົດທະບຽນການຍົກຍ້າຍ ມີຄວາມສຳຄັນໃນການເກັບກຳການປ່ຽນພູມລຳເນົາ, ທີ່ຢູ່ອາໄສຂອງບຸກຄົນ ຫຼື ຄອບຄົວ ເພື່ອຄຸ້ມຄອງ, ຈັດສັນທີ່ຢູ່, ອາຊີບ ແນໃສ່ຮັບປະກັນຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ແລະ ວາງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ.

ການຈົດທະບຽນການຍົກຍ້າຍ ໃຫ້ດຳເນີນຢູ່ອີງການທະບຽນຄອບຄົວຂອງຫ້ອງການພາຍໃນຂັ້ນເມືອງ ພາຍຫຼັງໄດ້ຮັບແຈ້ງການຍົກຍ້າຍ ຈາກກອງບັນຊາການປ້ອງກັນຄວາມສະຫງົບຂັ້ນເມືອງແລ້ວ ຫ້ອງການພາຍໃນຂັ້ນເມືອງບ່ອນຢູ່ເກົ່າ ຕ້ອງຈົດທະບຽນການຍົກຍ້າຍອອກ ແລະ ຫ້ອງການພາຍໃນຂັ້ນເມືອງບ່ອນຜູ້ກ່ຽວຍ້າຍໄປຢູ່ໃໝ່ ຕ້ອງຈົດທະບຽນການຍົກຍ້າຍເຂົ້າມາ ພາຍໃນເວລາ ຫ້າວັນ ລັດຖະການ ນັບແຕ່ວັນໄດ້ຮັບແຈ້ງ ເປັນຕົ້ນໄປ.

**ມາດຕາ 25 (ປັບປຸງ) ການຈົດທະບຽນສຳມະໂນຄົວ**

ການຈົດທະບຽນສຳມະໂນຄົວ ມີຄວາມສຳຄັນໃນການເກັບກຳ ແລະ ຄຸ້ມຄອງຈຳນວນພົນໃນຄອບຄົວ ຊຶ່ງເປັນຂໍ້ມູນພື້ນຖານ ໃຫ້ແກ່ວຽກງານປ້ອງກັນຄວາມສະຫງົບ ແລະ ການວາງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ.

ການຈົດທະບຽນສຳມະໂນຄົວ ຂອງພົນລະເມືອງລາວ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ ໃຫ້ດຳເນີນຢູ່ອີງການທະບຽນຄອບຄົວ ຂອງຂະແໜງການປ້ອງກັນຄວາມສະຫງົບບ່ອນຕົນອາໄສຢູ່ ຕາມການແບ່ງຂັ້ນຄຸ້ມຄອງ ແລະ ຕ້ອງພິຈາລະນາຈົດທະບຽນ ພາຍໃນເວລາ ສິບວັນ ນັບແຕ່ວັນໄດ້ຮັບຄຳຮ້ອງ ເປັນຕົ້ນໄປ.

ສຳລັບການເອົາເດັກເກີດໃໝ່ ເຂົ້າໃນທະບຽນສຳມະໂນຄົວ ຕ້ອງມີໃບຢັ້ງຢືນການເກີດ.

**ມາດຕາ 26 (ປັບປຸງ) ການອອກບັດປະຈຳຕົວ**

ການອອກບັດປະຈຳຕົວ ມີຄວາມສຳຄັນໃນການຢັ້ງຢືນປະຫວັດຂອງບຸກຄົນຜູ້ມີອາຍຸແຕ່ ສິບຫ້າ ປີ ຂຶ້ນໄປ ແລະ ອຳນວຍຄວາມສະດວກໃຫ້ແກ່ຜູ້ຖືບັດປະຈຳຕົວໃນການເຄື່ອນໄຫວວຽກງານ ແລະ ການເດີນທາງໄປ-ມາພາຍໃນປະເທດ.

ພົນລະເມືອງລາວ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ ຫຼັງຈາກໄດ້ຈົດທະບຽນສຳມະໂນຄົວແລ້ວ ຜູ້ທີ່ມີອາຍຸແຕ່ ສິບຫ້າ ປີ ຂຶ້ນໄປ ຕ້ອງມີບັດປະຈຳຕົວ ຊຶ່ງຜູ້ກ່ຽວຕ້ອງໄດ້ຂຽນປະຫວັດການເຄື່ອນໄຫວຂອງຕົນ ແລະ ຜ່ານການສຳພາດ ເພື່ອບັນທຶກເຂົ້າປຶ້ມທະບຽນປະຫວັດບຸກຄົນຂອງ ຂະແໜງການປ້ອງກັນຄວາມສະຫງົບ.

ເຈົ້າໜ້າທີ່ທະບຽນຄອບຄົວ ຂອງຂະແໜງການປ້ອງກັນຄວາມສະຫງົບ ຕ້ອງພິຈາລະນາອອກບັດປະຈຳຕົວໃຫ້ ພາຍໃນເວລາ ສິບວັນ ນັບແຕ່ວັນໄດ້ຮັບຄຳຮ້ອງ ເປັນຕົ້ນໄປ.

**ມາດຕາ 27 (ໃໝ່) ການຈົດທະບຽນການພັກເຊົາຊົ່ວຄາວ**

ການຈົດທະບຽນການພັກເຊົາຊົ່ວຄາວ ມີຄວາມສຳຄັນໃນການຄຸ້ມຄອງພົນລະເມືອງລາວ ໃນການພັກອາໄສຢູ່ສະຖານທີ່ອື່ນໃນໄລຍະໃດໜຶ່ງ ແນໃສ່ຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ.

ບຸກຄົນ ຫຼື ຄອບຄົວ ທີ່ມີຈຸດປະສົງໄປພັກເຊົາຢູ່ບ່ອນອື່ນໃນໄລຍະໃດໜຶ່ງ ຕ້ອງແຈ້ງພັກເຊົາຊົ່ວຄາວ ຕໍ່ອົງການປົກຄອງບ້ານບ່ອນຢູ່ໃໝ່. ຫຼັງຈາກນັ້ນໃຫ້ຜູ້ຕາງໜ້າຄອບຄົວ ຫຼື ຜູ້ໃຫ້ພັກເຊົາ ສະເໜີຕໍ່ກອງບັນຊາການປ້ອງກັນຄວາມສະຫງົບຂັ້ນເມືອງ ເພື່ອຈົດທະບຽນ ແລະ ອອກປຶ້ມອະນຸຍາດພັກເຊົາຊົ່ວຄາວໄລຍະ ສາມ ເດືອນ, ຫົກ ເດືອນ ຫຼື ໜຶ່ງ ປີ ແລະ ສາມາດຕໍ່ໄດ້ ຕາມແຕ່ກໍລະນີ.

ສຳລັບການພັກເຊົາຊົ່ວຄາວ ຫຼຸດ ສາມ ເດືອນລົງມາ ໃຫ້ຜູ້ຕາງໜ້າຄອບຄົວ ຫຼື ຜູ້ໃຫ້ພັກເຊົາແຈ້ງຕໍ່ອົງການປົກຄອງບ້ານ.

**ມາດຕາ 28 (ປັບປຸງ) ການຈົດທະບຽນການແຕ່ງຕັ້ງຜູ້ປົກຄອງ**

ການຈົດທະບຽນການແຕ່ງຕັ້ງຜູ້ປົກຄອງ ມີຄວາມສຳຄັນໃນການຢັ້ງຢືນ ແລະ ຮັບຮູ້ຜູ້ປົກຄອງເດັກໃນກໍລະນີທີ່ເດັກ ບໍ່ມີພໍ່ແມ່ ເພື່ອດູແລເບິ່ງແຍງ ແລະ ສຶກສາອົບຮົມ.

ການຈົດທະບຽນການແຕ່ງຕັ້ງຜູ້ປົກຄອງ ໃຫ້ດຳເນີນຢູ່ຫ້ອງການຍຸຕິທຳຂັ້ນເມືອງ ບ່ອນຜູ້ປົກຄອງອາໄສຢູ່ ຫຼື ບ່ອນສານລົງຄຳຕັດສິນ ກ່ຽວກັບການແຕ່ງຕັ້ງຜູ້ປົກຄອງ.

ຫ້ອງການຍຸຕິທຳຂັ້ນເມືອງດັ່ງກ່າວ ຕ້ອງຈົດທະບຽນ ແລະ ອອກໃບຢັ້ງຢືນການແຕ່ງຕັ້ງການເປັນຜູ້ປົກຄອງ ພາຍໃນເວລາ ສິບວັນ ນັບແຕ່ວັນແຕ່ງຕັ້ງຜູ້ປົກຄອງຈາກນາຍບ້ານ ຫຼື ນັບແຕ່ວັນໄດ້ຮັບຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ເປັນຕົ້ນໄປ.

**ມາດຕາ 29 (ປັບປຸງ) ການຈົດທະບຽນການເອົາເດັກເປັນລູກລ້ຽງ**

ການຈົດທະບຽນການເອົາເດັກເປັນລູກລ້ຽງ ມີຄວາມສຳຄັນໃນການຢັ້ງຢືນການເອົາລູກຂອງຜູ້ອື່ນ ມາເປັນລູກຂອງຕົນ ແລະ ຮັບປະກັນສາຍພົວພັນຄອບຄົວ ລະຫວ່າງ ພໍ່ລ້ຽງ, ແມ່ລ້ຽງ ກັບລູກລ້ຽງ.

ການຈົດທະບຽນການເອົາເດັກເປັນລູກລ້ຽງ ສຳລັບພົນລະເມືອງລາວດ້ວຍກັນ ໃຫ້ດຳເນີນຢູ່ຫ້ອງການຍຸຕິທຳຂັ້ນເມືອງ ບ່ອນພໍ່ລ້ຽງ, ແມ່ລ້ຽງອາໄສຢູ່. ຫ້ອງການຍຸຕິທຳຂັ້ນເມືອງ ຕ້ອງພິຈາລະນາຈົດທະບຽນ ແລະ ອອກໃບຢັ້ງຢືນການເອົາເດັກເປັນລູກລ້ຽງ ພາຍໃນເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບຄຳຮ້ອງ ເປັນຕົ້ນໄປ ແລ້ວແຈ້ງໃຫ້ກອງບັນຊາການປ້ອງກັນຄວາມສະຫງົບຂັ້ນເມືອງ.

ການຈົດທະບຽນການເອົາເດັກນ້ອຍລາວເປັນລູກລ້ຽງ ຂອງຄົນຕ່າງດ້າວ ຫຼື ຄົນຕ່າງປະເທດໃຫ້ດຳເນີນຢູ່ກົມທີ່ຮັບຜິດຊອບວຽກງານທະບຽນຄອບຄົວຂອງກະຊວງຍຸຕິທຳ. ກົມດັ່ງກ່າວ ຕ້ອງພິຈາລະນາຈົດທະບຽນ ແລະ ອອກໃບຢັ້ງຢືນການເອົາເດັກເປັນລູກລ້ຽງ ພາຍໃນເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບຄຳຮ້ອງເປັນຕົ້ນໄປ ແລ້ວແຈ້ງໃຫ້ກະຊວງພາຍໃນ, ກະຊວງປ້ອງກັນຄວາມສະຫງົບ ແລະ ກະຊວງການຕ່າງປະເທດ.

ສຳລັບການເອົາເດັກນ້ອຍທີ່ເປັນຄົນຕ່າງປະເທດ ມາເປັນລູກລ້ຽງຂອງຄົນລາວ ໃຫ້ປະຕິບັດຕາມກົດໝາຍຂອງປະເທດທີ່ກ່ຽວຂ້ອງ.

**ມາດຕາ 30 (ປັບປຸງ) ການຈົດທະບຽນການຮັບຮູ້ການເປັນພໍ່ ຫຼື ແມ່**

ການຈົດທະບຽນການຮັບຮູ້ການເປັນພໍ່ ມີຄວາມສໍາຄັນໃນການຢັ້ງຢືນຄວາມເປັນພໍ່ ໃນກໍລະນີທີ່ພໍ່ກັບແມ່ ບໍ່ໄດ້ແຕ່ງດອງ ຫຼື ບໍ່ໄດ້ຢູ່ນໍາກັນ ເພື່ອຮັບປະກັນສາຍພົວພັນຄອບຄົວລະຫວ່າງ ພໍ່ ກັບ ລູກ.

ການຈົດທະບຽນການຮັບຮູ້ການເປັນແມ່ ມີຄວາມສໍາຄັນໃນການຢັ້ງຢືນຄວາມເປັນແມ່ ໃນກໍລະນີທີ່ແມ່ປະຖິ້ມເດັກ ຫຼື ມີການສັບປ່ຽນເດັກ ເພື່ອຮັບປະກັນສາຍພົວພັນຄອບຄົວລະຫວ່າງ ແມ່ ກັບ ລູກ.

ການຈົດທະບຽນການຮັບຮູ້ການເປັນພໍ່ ຫຼື ແມ່ ໃຫ້ດໍາເນີນຢູ່ຫ້ອງການຍຸຕິທໍາຂັ້ນເມືອງ ບ່ອນພໍ່ ຫຼື ແມ່ອາໄສຢູ່ ຫຼື ບ່ອນສານລົງຄໍາຕັດສິນ ກ່ຽວກັບການຮັບຮູ້ການເປັນ ພໍ່ ຫຼື ແມ່.

ຫ້ອງການຍຸຕິທໍາຂັ້ນເມືອງດັ່ງກ່າວ ຕ້ອງຈົດທະບຽນ ແລະ ອອກໃບຢັ້ງຢືນການຮັບຮູ້ການເປັນພໍ່ ຫຼື ແມ່ ພາຍໃນເວລາ ສິບວັນ ນັບແຕ່ວັນໄດ້ຮັບຄໍາຮ້ອງຂໍກ່ຽວກັບການຮັບຮູ້ການເປັນ ພໍ່ ຫຼື ແມ່ ຕາມການຮັບຮູ້ ຫຼື ຕາມຄໍາຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ເປັນຕົ້ນໄປ.

**ມາດຕາ 31 (ປັບປຸງ) ການຈົດທະບຽນການຫາຍສາບສູນ**

ການຈົດທະບຽນການຫາຍສາບສູນ ມີຄວາມສໍາຄັນໃນການປົກປ້ອງ ຊັບສິນ, ສິດ, ຜົນປະໂຫຍດ ແລະ ພັນທະຂອງຜູ້ຫາຍສາບສູນ ລວມທັງຜູ້ຮ້ອງຂໍໃຫ້ມີການຫາຍສາບສູນ.

ການຈົດທະບຽນການຫາຍສາບສູນ ໃຫ້ດໍາເນີນຢູ່ຫ້ອງການຍຸຕິທໍາຂັ້ນເມືອງ ບ່ອນຜູ້ຮ້ອງຂໍອາໄສຢູ່ ພາຍໃນເວລາ ສາມສິບວັນ ນັບແຕ່ວັນມີຄໍາຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ເປັນຕົ້ນໄປ ແລະ ຫ້ອງການຍຸຕິທໍາຂັ້ນເມືອງທີ່ກ່ຽວຂ້ອງ ຕ້ອງແຈ້ງໄປຍັງຫ້ອງການພາຍໃນຂັ້ນເມືອງ ພາຍໃນເວລາ ຫ້າວັນ ລັດຖະການ.

ສໍາລັບການຫາຍສາບສູນຂອງຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ໃຫ້ດໍາເນີນຢູ່ພະແນກຍຸຕິທໍາຂັ້ນແຂວງ ບ່ອນຜູ້ຮ້ອງຂໍອາໄສຢູ່ ພາຍໃນເວລາ ສາມສິບວັນ ນັບແຕ່ວັນມີຄໍາຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ເປັນຕົ້ນໄປ. ພາຍຫຼັງທີ່ໄດ້ຈົດທະບຽນການຫາຍສາບສູນແລ້ວ ພະແນກຍຸຕິທໍາຂັ້ນແຂວງທີ່ກ່ຽວຂ້ອງ ຕ້ອງແຈ້ງໄປຍັງກອງບັນຊາການປ້ອງກັນຄວາມສະຫງົບຂັ້ນແຂວງ.

**ມາດຕາ 32 (ປັບປຸງ) ການປ່ຽນແປງ, ການລົບລ້າງ ແລະ ການຄັດຄ້ານ ການຈົດທະບຽນຄອບຄົວ**

ບຸກຄົນໃດ ຫາກເຫັນວ່າ ການຈົດທະບຽນຄອບຄົວຂອງຕົນ ບໍ່ຖືກຕ້ອງແລ້ວ ຜູ້ກ່ຽວມີສິດຮ້ອງຂໍຕໍ່ເຈົ້າໜ້າທີ່ທະບຽນຄອບຄົວບ່ອນຕົນອາໄສຢູ່ ເພື່ອໃຫ້ປ່ຽນແປງ ຫຼື ລົບລ້າງ. ໃນກໍລະນີທີ່ເຈົ້າໜ້າທີ່ທະບຽນຄອບຄົວ ຫາກບໍ່ພິຈາລະນາຜູ້ກ່ຽວກໍມີສິດຮ້ອງຂໍຕໍ່ສານ ເພື່ອໃຫ້ປ່ຽນແປງ ຫຼື ລົບລ້າງການຈົດທະບຽນດັ່ງກ່າວ.

ສໍາລັບການຈົດທະບຽນຄອບຄົວ ທີ່ແຕະຕ້ອງເຖິງ ສິດ ແລະ ຜົນປະໂຫຍດຂອງບຸກຄົນໃດໜຶ່ງ ບຸກຄົນນັ້ນ ກໍມີສິດຂໍຄັດຄ້ານການຈົດທະບຽນດັ່ງກ່າວ.

ເຈົ້າໜ້າທີ່ທະບຽນຄອບຄົວ ທີ່ເຫັນວ່າການຈົດທະບຽນຄອບຄົວຂອງຕົນບໍ່ຖືກຕ້ອງ ກໍມີສິດປ່ຽນແປງ ຫຼື ລົບລ້າງໂດຍໜ້າທີ່ໄດ້.

ການປ່ຽນແປງ ຫຼື ລົບລ້າງການຈົດທະບຽນຄອບຄົວ ຕ້ອງພິຈາລະນາ ພາຍໃນເວລາ ສິບຫ້າວັນ ນັບແຕ່ວັນໄດ້ຮັບຄໍາຮ້ອງ ເປັນຕົ້ນໄປ.

## ໝວດທີ 3
## ຖານຂໍ້ມູນທະບຽນຄອບຄົວ

### ມາດຕາ 33 (ໃໝ່) ຖານຂໍ້ມູນທະບຽນຄອບຄົວ

ຖານຂໍ້ມູນທະບຽນຄອບຄົວ ແມ່ນ ລະບົບຂໍ້ມູນການຄຸ້ມຄອງພົນລະເມືອງ ທີ່ບັນທຶກວຽກງານທະບຽນຄອບຄົວທັງໝົດ ເພື່ອເປັນພື້ນຖານໃນການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ, ນຳໃຊ້ເຂົ້າໃນການຄຸ້ມຄອງ, ກຳນົດນະໂຍບາຍ ແລະ ວາງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃນແຕ່ລະໄລຍະ.

ຖານຂໍ້ມູນທະບຽນຄອບຄົວ ປະກອບດ້ວຍ ປຶ້ມບັນທຶກທະບຽນຄອບຄົວ ແລະ ຖານຂໍ້ມູນທະບຽນຄອບຄົວເອເລັກໂຕຣນິກ.

### ມາດຕາ 34 (ໃໝ່) ປຶ້ມບັນທຶກທະບຽນຄອບຄົວ

ປຶ້ມບັນທຶກທະບຽນຄອບຄົວ ແມ່ນ ປຶ້ມບັນທຶກຂໍ້ມູນກ່ຽວກັບການຈົດທະບຽນຄອບຄົວ ຊຶ່ງເປັນພື້ນຖານທາງດ້ານກົດໝາຍໃນການ ສ້າງ, ດັດແກ້ ແລະ ເພີ່ມເຕີມຂໍ້ມູນຂອງບຸກຄົນ ຫຼື ຄອບຄົວເຂົ້າໃນປຶ້ມບັນທຶກທະບຽນຄອບຄົວ ແລະ ຖານຂໍ້ມູນທະບຽນຄອບຄົວເອເລັກໂຕຣນິກ.

ການຈົດທະບຽນຄອບຄົວແຕ່ລະປະເພດ ຕ້ອງໄດ້ບັນທຶກເຂົ້າໃນປຶ້ມບັນທຶກທະບຽນຄອບຄົວ ໂດຍໃຫ້ຜູ້ຮ້ອງຂໍ ແລະ ເຈົ້າໜ້າທີ່ທະບຽນຄອບຄົວລົງລາຍເຊັນ ແລະ ປະທັບຕາ.

ປຶ້ມບັນທຶກທະບຽນຄອບຄົວ ຕ້ອງປິດໃນວັນສຸດທ້າຍຂອງປີ ຊຶ່ງຈະຕ້ອງໄດ້ສັງລວມຈຳນວນໜ້າ ແລະ ຈຳນວນກໍລະນີຂອງການຈົດທະບຽນ ແລ້ວໃຫ້ເຈົ້າໜ້າທີ່ທະບຽນຄອບຄົວລົງລາຍເຊັນ ແລະ ປະທັບຕາ.

ອົງການທະບຽນຄອບຄົວທີ່ກ່ຽວຂ້ອງ ຕ້ອງເກັບຮັກສາປຶ້ມບັນທຶກທະບຽນຄອບຄົວ ໄວ້ຕະຫຼອດໄປ.

### ມາດຕາ 35 (ໃໝ່) ຖານຂໍ້ມູນທະບຽນຄອບຄົວເອເລັກໂຕຣນິກ

ຖານຂໍ້ມູນທະບຽນຄອບຄົວເອເລັກໂຕຣນິກ ແມ່ນ ລະບົບຂໍ້ມູນທີ່ສ້າງຂຶ້ນ ເພື່ອສັງລວມ, ຮັກສາ, ປັບປຸງ, ຄຸ້ມຄອງ ແລະ ຊອກຫາຂໍ້ມູນກ່ຽວກັບການຈົດທະບຽນຄອບຄົວ ຊຶ່ງສາມາດເຊື່ອມຕໍ່ກັບຖານຂໍ້ມູນທະບຽນຄອບຄົວຂອງຂະແໜງການອື່ນທີ່ກ່ຽວຂ້ອງ ເພື່ອປ້ອນ ຫຼື ແລກປ່ຽນຂໍ້ມູນ.

ສຳລັບການຄຸ້ມຄອງຖານຂໍ້ມູນທະບຽນຄອບຄົວເອເລັກໂຕຣນິກ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

### ມາດຕາ 36 (ໃໝ່) ການປ້ອນ ແລະ ດັດແກ້ຂໍ້ມູນໃນຖານຂໍ້ມູນທະບຽນຄອບຄົວເອເລັກໂຕຣນິກ

ຂໍ້ມູນກ່ຽວກັບການຈົດທະບຽນຄອບຄົວ ພາຍຫຼັງໄດ້ຈົດເຂົ້າປຶ້ມບັນທຶກທະບຽນຄອບຄົວແລ້ວ ເຈົ້າໜ້າທີ່ທະບຽນຄອບຄົວທີ່ກ່ຽວຂ້ອງ ຕ້ອງປ້ອນຂໍ້ມູນເຂົ້າໃນຖານຂໍ້ມູນທະບຽນຄອບຄົວເອເລັກໂຕຣນິກ ໃຫ້ຖືກຕ້ອງ ແລະ ຄົບຖ້ວນ.

ໃນກໍລະນີຂໍ້ມູນທີ່ປ້ອນເຂົ້າຖານຂໍ້ມູນເອເລັກໂຕຣນິກ ຫາກມີຄວາມແຕກຕ່າງກັບຂໍ້ມູນໃນປຶ້ມບັນທຶກທະບຽນຄອບຄົວນັ້ນ ໃຫ້ດັດແກ້ຂໍ້ມູນຖືກຕ້ອງຕາມປຶ້ມບັນທຶກທະບຽນຄອບຄົວ.

**ມາດຕາ 37 (ໃໝ່) ການຄຸ້ມຄອງ ແລະ ນຳໃຊ້ຂໍ້ມູນໃນຖານຂໍ້ມູນທະບຽນຄອບຄົວ**

ຂໍ້ມູນໃນຖານຂໍ້ມູນທະບຽນຄອບຄົວ ຕ້ອງໄດ້ຄຸ້ມຄອງ, ເກັບຮັກສາເປັນຄວາມລັບ ແລະ ມີຄວາມປອດໄພ ຊຶ່ງມີແຕ່ເຈົ້າໜ້າທີ່ທະບຽນຄອບຄົວທີ່ກ່ຽວຂ້ອງເທົ່ານັ້ນ ສາມາດເຂົ້າເຖິງໄດ້.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ຕ້ອງການນຳໃຊ້ຂໍ້ມູນໃນຖານຂໍ້ມູນທະບຽນຄອບຄົວ ຕ້ອງໄດ້ຮັບອະນຸຍາດຈາກເຈົ້າໜ້າທີ່ທະບຽນຄອບຄົວ ພ້ອມທັງເສຍຄ່າທຳນຽມ ແລະ ຄ່າບໍລິການ ຕາມລະບຽບການ.

# ພາກທີ III
# ການຈັດຕັ້ງປະຕິບັດວຽກງານທະບຽນຄອບຄົວ
## ໝວດທີ 1
## ອົງການທະບຽນຄອບຄົວ

**ມາດຕາ 38 (ປັບປຸງ) ອົງການທະບຽນຄອບຄົວ**

ອົງການທະບຽນຄອບຄົວ ແມ່ນ ອົງການຂອງລັດ ຊຶ່ງປະກອບດ້ວຍ ຂະແໜງການພາຍໃນ, ຂະແໜງການປ້ອງກັນຄວາມສະຫງົບ, ຂະແໜງການຍຸຕິທຳ ແລະ ຂະແໜງການການຕ່າງປະເທດ.

ການຈົດທະບຽນຄອບຄົວຂອງພົນລະເມືອງລາວ, ຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ຕ້ອງດຳເນີນຢູ່ອົງການທະບຽນຄອບຄົວ ຂອງຂະແໜງການທີ່ກ່ຽວຂ້ອງ ແຕ່ລະຂັ້ນຢ່າງຖືກຕ້ອງຕາມການແບ່ງຂັ້ນຄຸ້ມຄອງ.

**ມາດຕາ 39 (ໃໝ່) ອົງການທະບຽນຄອບຄົວ ຂອງຂະແໜງການພາຍໃນ**

ອົງການທະບຽນຄອບຄົວ ຂອງຂະແໜງການພາຍໃນ ປະກອບດ້ວຍ:

1. ກົມຄຸ້ມຄອງພົນລະເມືອງ ກະຊວງພາຍໃນ;
2. ຂະແໜງທີ່ຮັບຜິດຊອບວຽກງານທະບຽນຄອບຄົວ ພະແນກພາຍໃນຂັ້ນແຂວງ;
3. ໜ່ວຍງານທີ່ຮັບຜິດຊອບວຽກງານທະບຽນຄອບຄົວ ຫ້ອງການພາຍໃນຂັ້ນເມືອງ.

**ມາດຕາ 40 (ປັບປຸງ) ສິດ ແລະ ໜ້າທີ່ຂອງອົງການທະບຽນຄອບຄົວຂອງຂະແໜງການພາຍໃນ**

ອົງການທະບຽນຄອບຄົວຂອງຂະແໜງການພາຍໃນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈົດທະບຽນການເກີດ;
2. ຈົດທະບຽນການແຕ່ງດອງ;
3. ຈົດທະບຽນການຢ່າຮ້າງ;
4. ຈົດທະບຽນການເສຍຊີວິດ, ການເສຍຊີວິດ ຕາມຄຳຕັດສິນຂອງສານ;
5. ຈົດທະບຽນການປ່ຽນ ຊື່ ຫຼື ນາມສະກຸນ;
6. ຈົດທະບຽນການປ່ຽນສັນຊາດ;
7. ຈົດທະບຽນການຍົກຍ້າຍ;

8. ແຈ້ງການຈົດທະບຽນ ການເກີດ, ການເສຍຊີວິດ, ການປ່ຽນ ຊື່ ຫຼື ນາມສະກຸນ, ການປ່ຽນສັນຊາດ ໃຫ້ຂະແໜງການປ້ອງກັນຄວາມສະຫງົບ;

9. ສັງລວມສະຖິຕິພົນລະເມືອງ;

10. ເກັບຮັກສາເອກະສານຈົດທະບຽນ;

11. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດວຽກງານທະບຽນຄອບຄົວ;

12. ສະຫຼຸບ ສັງລວມ, ຕິດຕາມ, ກວດກາ, ປະເມີນຜົນ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານກ່ຽວກັບທະບຽນຄອບຄົວ ໃຫ້ຂັ້ນເທິງຢ່າງເປັນປົກກະຕິ;

13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 41 (ປັບປຸງ) ອົງການທະບຽນຄອບຄົວຂອງຂະແໜງການປ້ອງກັນຄວາມສະຫງົບ**

ອົງການທະບຽນຄອບຄົວຂອງຂະແໜງການປ້ອງກັນຄວາມສະຫງົບ ປະກອບດ້ວຍ:

1. ກົມຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ ກະຊວງປ້ອງກັນຄວາມສະຫງົບ;

2. ຫ້ອງຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານກອງບັນຊາການປ້ອງກັນຄວາມສະຫງົບຂັ້ນແຂວງ;

3. ພະແນກຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານກອງບັນຊາການປ້ອງກັນຄວາມສະຫງົບຂັ້ນເມືອງ.

**ມາດຕາ 42 (ປັບປຸງ) ສິດ ແລະ ໜ້າທີ່ຂອງອົງການທະບຽນຄອບຄົວຂອງຂະແໜງການປ້ອງກັນຄວາມສະຫງົບ**

ອົງການທະບຽນຄອບຄົວຂອງຂະແໜງການປ້ອງກັນຄວາມສະຫງົບ ມີ ສິດ ແລະ ໜ້າທີ່ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈົດທະບຽນສຳມະໂນຄົວ;

2. ອອກບັດປະຈຳຕົວ;

3. ຄົ້ນຄວ້າ ພິຈາລະນາການຂໍຍົກຍ້າຍ;

4. ຈົດທະບຽນການພັກເຊົາຊົ່ວຄາວ;

5. ຮັບແຈ້ງການພົບເຫັນເດັກທີ່ຖືກປະຖິ້ມ, ຊາກສົບ ແລະ ຢັ້ງຢືນສາເຫດຂອງການເສຍຊີວິດ;

6. ຮັບແຈ້ງການເກີດ, ການປ່ຽນຊື່ ຫຼື ນາມສະກຸນ, ການປ່ຽນສັນຊາດ, ການຫາຍສາບສູນ ແລະ ການເສຍຊີວິດ ພາຍຫຼັງໄດ້ຈົດທະບຽນແລ້ວ;

7. ເກັບຮັກສາເອກະສານຈົດທະບຽນ;

8. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານທະບຽນຄອບຄົວ;

9. ສະຫຼຸບ ສັງລວມ, ຕິດຕາມ, ກວດກາ, ປະເມີນຜົນ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານກ່ຽວກັບທະບຽນຄອບຄົວ ໃຫ້ຂັ້ນເທິງຢ່າງເປັນປົກກະຕິ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 43 (ປັບປຸງ) ອົງການທະບຽນຄອບຄົວຂອງຂະແໜງການຍຸຕິທຳ**

ອົງການທະບຽນຄອບຄົວຂອງຂະແໜງການຍຸຕິທຳ ປະກອບດ້ວຍ:

1. ກົມສົ່ງເສີມລະບົບຍຸຕິທຳ ກະຊວງຍຸຕິທຳ;
2. ຂະແໜງທີ່ຮັບຜິດຊອບວຽກງານທະບຽນຄອບຄົວ ພະແນກຍຸຕິທຳຂັ້ນແຂວງ;
3. ໜ່ວຍງານທີ່ຮັບຜິດຊອບວຽກງານທະບຽນຄອບຄົວ ຫ້ອງການຍຸຕິທຳຂັ້ນເມືອງ.

**ມາດຕາ 44 (ປັບປຸງ) ສິດ ແລະ ໜ້າທີ່ຂອງອົງການທະບຽນຄອບຄົວຂອງຂະແໜງການຍຸຕິທຳ**

ອົງການທະບຽນຄອບຄົວຂອງຂະແໜງການຍຸຕິທຳ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈົດທະບຽນການຫາຍສາບສູນ;
2. ຈົດທະບຽນການເອົາເດັກເປັນລູກລ້ຽງ;
3. ຈົດທະບຽນການຮັບຮູ້ການເປັນ ພໍ່ ຫຼື ແມ່;
4. ຈົດທະບຽນການແຕ່ງຕັ້ງຜູ້ປົກຄອງ;
5. ແຈ້ງການຈົດທະບຽນການຫາຍສາບສູນ ຂອງຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ໃຫ້ຂະແໜງການປ້ອງກັນຄວາມສະຫງົບ;
6. ເກັບຮັກສາເອກະສານຈົດທະບຽນ;
7. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານທະບຽນຄອບຄົວ;
8. ສະຫຼຸບ ສັງລວມ, ຕິດຕາມ, ກວດກາ, ປະເມີນຜົນ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານກ່ຽວກັບທະບຽນຄອບຄົວ ໃຫ້ຂັ້ນເທິງຢ່າງເປັນປົກກະຕິ;
9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 45 (ປັບປຸງ) ສິດ ແລະ ໜ້າທີ່ ຂອງອົງການທະບຽນຄອບຄົວຂອງຂະແໜງການການຕ່າງປະເທດ**

ການຈົດທະບຽນຄອບຄົວຂອງຂະແໜງການການຕ່າງປະເທດ ໃຫ້ດຳເນີນຢູ່ໜ່ວຍງານທະບຽນຄອບຄົວສຳນັກງານຜູ້ຕາງໜ້າຂອງ ສປປ ລາວ ຢູ່ ຕ່າງປະເທດ ໂດຍຂຶ້ນກັບການຄຸ້ມຄອງຂອງກະຊວງການຕ່າງປະເທດ ຊຶ່ງມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຈົດທະບຽນຄອບຄົວຂອງພົນລະເມືອງລາວ ທີ່ອາໄສຢູ່ຕ່າງປະເທດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 9 ຂອງກົດໝາຍສະບັບນີ້ ຍົກເວັ້ນການຈົດທະບຽນ ສຳມະໂນຄົວ, ການອອກບັດປະຈຳຕົວ, ການປ່ຽນຊື່ ຫຼື ນາມສະກຸນ, ການຍົກຍ້າຍ ແລະ ການພັກເຊົາຊົ່ວຄາວ;
2. ແຈ້ງການຈົດທະບຽນຄອບຄົວໃຫ້ຂະແໜງການພາຍໃນ ແລະ ຂະແໜງການຍຸຕິທຳ;
3. ເກັບຮັກສາເອກະສານຈົດທະບຽນ;
4. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດວຽກງານທະບຽນຄອບຄົວ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

5. ສະຫຼຸບ ສັງລວມ, ຕິດຕາມ, ກວດກາ, ປະເມີນຜົນ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານກ່ຽວກັບທະບຽນຄອບຄົວ ໃຫ້ຂັ້ນເທິງຢ່າງເປັນປົກກະຕິ;

6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 46 (ປັບປຸງ) ໂຄງປະກອບບຸກຄະລາກອນຂອງອົງການທະບຽນຄອບຄົວ**

ບຸກຄະລາກອນຂອງອົງການທະບຽນຄອບຄົວ ປະກອບດ້ວຍ:

1. ຫົວໜ້າ;
2. ຮອງຫົວໜ້າ ຈຳນວນໜຶ່ງ;
3. ພະນັກງານວິຊາການ ແລະ ພະນັກງານບໍລິຫານ ຈຳນວນໜຶ່ງ.

## ໝວດທີ 2
## ເຈົ້າໜ້າທີ່ທະບຽນຄອບຄົວ

**ມາດຕາ 47 (ປັບປຸງ) ເຈົ້າໜ້າທີ່ທະບຽນຄອບຄົວ**

ເຈົ້າໜ້າທີ່ທະບຽນຄອບຄົວ ແມ່ນ ຜູ້ຖືກມອບໝາຍຈາກການຈັດຕັ້ງ ໃຫ້ຮັບຜິດຊອບວຽກງານທະບຽນຄອບຄົວ ຊຶ່ງແມ່ນ ຫົວໜ້າ ແລະ ຮອງຫົວໜ້າ ອົງການທະບຽນຄອບຄົວເທົ່ານັ້ນ.

**ມາດຕາ 48 ສິດ ແລະ ໜ້າທີ່ ຂອງເຈົ້າໜ້າທີ່ທະບຽນຄອບຄົວ**

ຫົວໜ້າອົງການທະບຽນຄອບຄົວ ມີ ສິດ ແລະ ໜ້າທີ່ ຈົດທະບຽນຄອບຄົວ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 9 ຂອງກົດໝາຍສະບັບນີ້.

ຮອງຫົວໜ້າອົງການທະບຽນຄອບຄົວ ມີໜ້າທີ່ຊ່ວຍຫົວໜ້າອົງການທະບຽນຄອບຄົວໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານ ແລະ ຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍຂອງຫົວໜ້າ.

ໃນກໍລະນີ ທີ່ຫົວໜ້າ ຫາກບໍ່ຢູ່ ຫຼື ຕິດຂັດ ແມ່ນ ຮອງຫົວໜ້າ ຜູ້ຖືກມອບໝາຍຈາກຫົວໜ້າ ເປັນຜູ້ຮັກສາການ ແລະ ຈົດທະບຽນຄອບຄົວແທນ.

**ມາດຕາ 49 ມາດຕະຖານຂອງເຈົ້າໜ້າທີ່ທະບຽນຄອບຄົວ**

ເຈົ້າໜ້າທີ່ທະບຽນຄອບຄົວ ມີມາດຕະຖານທົ່ວໄປ ດັ່ງນີ້:

1. ເປັນພົນລະເມືອງລາວ;
2. ມີອາຍຸ ແຕ່ ຊາວເອັດປີ ຂຶ້ນໄປ;
3. ມີຄຸນສົມບັດ ສິນທຳປະຕິວັດ, ມີຈັນຍາບັນ, ມີຈິດໃຈຊື່ສັດບໍລິສຸດໃນການປະຕິບັດໜ້າທີ່;
4. ບໍ່ເຄີຍຖືກສານຕັດສິນລົງໂທດຕັດອິດສະລະພາບ ໃນສະຖານການກະທຳຜິດໂດຍເຈດຕະນາ;
5. ມີສຸຂະພາບດີ.

ສຳລັບເຈົ້າໜ້າທີ່ທະບຽນຄອບຄົວຂອງແຕ່ລະຂະແໜງການ ມີມາດຕະຖານສະເພາະ ຊຶ່ງໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 50 ການແຕ່ງຕັ້ງ ຫຼື ປົດຕຳແໜ່ງເຈົ້າໜ້າທີ່ທະບຽນຄອບຄົວ**

ຫົວໜ້າອົງການທະບຽນຄອບຄົວຂັ້ນກະຊວງ ຖືກແຕ່ງຕັ້ງ ຫຼື ປົດຕຳແໜ່ງ ໂດຍນາຍົກລັດຖະມົນຕີ ຕາມການສະເໜີຂອງລັດຖະມົນຕີກະຊວງທີ່ກ່ຽວຂ້ອງ.

ຮອງຫົວໜ້າອົງການທະບຽນຄອບຄົວຂັ້ນກະຊວງ ແມ່ນ ລັດຖະມົນຕີກະຊວງທີ່ກ່ຽວຂ້ອງ ເປັນຜູ້ແຕ່ງຕັ້ງ ຫຼື ປົດຕຳແໜ່ງ.

ຫົວໜ້າ ແລະ ຮອງຫົວໜ້າ ອົງການທະບຽນຄອບຄົວຂັ້ນແຂວງ, ຂັ້ນເມືອງ ຖືກແຕ່ງຕັ້ງ ຫຼື ປົດຕຳແໜ່ງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ.

## ໝວດທີ 3
## ຄ່າທຳນຽມ ແລະ ຄ່າບໍລິການ

**ມາດຕາ 51 (ປັບປຸງ) ຄ່າທຳນຽມ**

ຄ່າທຳນຽມ ແມ່ນ ຄ່າສິດຄຸ້ມຄອງບໍລິຫານຂອງລັດ ທີ່ເກັບຈາກບຸກຄົນ ທີ່ຮ້ອງຂໍຈົດທະບຽນຄອບຄົວ ໂດຍຜ່ານອົງການທະບຽນຄອບຄົວທີ່ກ່ຽວຂ້ອງ.

ການເກັບ ແລະ ການມອບຄ່າທຳນຽມ ໃຫ້ປະຕິບັດຕາມລັດຖະບັນຍັດຂອງປະທານປະເທດວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ທີ່ປະກາດໃຊ້ໃນແຕ່ລະໄລຍະ.

**ມາດຕາ 52 ຄ່າບໍລິການ**

ຄ່າບໍລິການ ແມ່ນ ຄ່າຮັບໃຊ້ທາງດ້ານບໍລິຫານວິຊາການຂອງອົງການທະບຽນຄອບຄົວ ທີ່ເກັບຈາກບຸກຄົນ ທີ່ຮ້ອງຂໍຈົດທະບຽນ ໂດຍບໍ່ຫວັງຜົນກຳໄລ ແລະ ເພື່ອເປັນການຊ່ວຍໜູນການໃຊ້ຈ່າຍງົບປະມານຂອງລັດ.

ການເກັບ ແລະ ການມອບຄ່າບໍລິການ ໃຫ້ປະຕິບັດຕາມລັດຖະບັນຍັດຂອງປະທານປະເທດວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ທີ່ປະກາດໃຊ້ໃນແຕ່ລະໄລຍະ.

# ພາກທີ IV
# ຂໍ້ຫ້າມ

**ມາດຕາ 53 (ປັບປຸງ) ຂໍ້ຫ້າມສຳລັບເຈົ້າໜ້າທີ່ທະບຽນຄອບຄົວ ແລະ ພະນັກງານອື່ນຂອງອົງການທະບຽນຄອບຄົວ**

ຫ້າມເຈົ້າໜ້າທີ່ທະບຽນຄອບຄົວ ແລະ ພະນັກງານອື່ນຂອງອົງການທະບຽນຄອບຄົວ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ໜ້າທີ່ຕຳແໜ່ງ ເພື່ອຫາຜົນປະໂຫຍດແກ່ ຕົນ, ຄອບຄົວ, ໝູ່ເພື່ອນ ຫຼື ບຸກຄົນອື່ນ;
2. ໃຊ້ອຳນາດເກີນຂອບເຂດ;
3. ປອມແປງເອກະສານ ຫຼື ຂໍ້ມູນ ກ່ຽວກັບວຽກງານທະບຽນຄອບຄົວ;
4. ຮັບ, ທວງເອົາ ຫຼື ຂໍເອົາສິນບົນ;
5. ຖ່ວງດຶງ, ຊຸກເຊື່ອງ ຫຼື ທຳລາຍເອກະສານກ່ຽວກັບວຽກງານທະບຽນຄອບຄົວ;

6. ເກັບຄ່າທຳນຽມ ຫຼື ຄ່າບໍລິການ ການຈົດທະບຽນຄອບຄົວບໍ່ຖືກຕ້ອງຕາມທີ່ໄດ້ກຳນົດໄວ້;

7. ເປີດເຜີຍຂໍ້ມູນສ່ວນຕົວຂອງບຸກຄົນ ກ່ຽວກັບວຽກງານທະບຽນຄອບຄົວໂດຍບໍ່ໄດ້ຮັບອະນຸຍາດ;

8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 54 (ປັບປຸງ) ຂໍ້ຫ້າມສຳລັບຜູ້ຮ້ອງຂໍຈົດທະບຽນ**

ຫ້າມຜູ້ຮ້ອງຂໍຈົດທະບຽນ ມີພຶດຕິກຳ ດັ່ງນີ້:

1. ສະໜອງເອກະສານ ຫຼື ຂໍ້ມູນ ທີ່ບໍ່ຖືກຕ້ອງຕາມຄວາມຈິງ;

2. ໃຫ້ສິນບົນແກ່ເຈົ້າໜ້າທີ່ທະບຽນຄອບຄົວ ຫຼື ພະນັກງານອື່ນຂອງອົງການທະບຽນຄອບຄົວ;

3. ບັງຄັບ, ນາບຂູ່ ຫຼື ໃຊ້ຄວາມຮຸນແຮງ, ຕົວະຍົວະ, ຫຼອກລວງ ເຈົ້າໜ້າທີ່ທະບຽນຄອບຄົວ ຫຼື ພະນັກງານອື່ນຂອງອົງການທະບຽນຄອບຄົວ;

4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 55 (ປັບປຸງ) ຂໍ້ຫ້າມສຳລັບບຸກຄົນ, ນິຕິບຸກຄົນຫຼື ການຈັດຕັ້ງອື່ນ**

ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ມີພຶດຕິກຳ ດັ່ງນີ້:

1. ປະຕິເສດການຮ່ວມມື, ຂັດຂວາງການປະຕິບັດໜ້າທີ່ ຂອງເຈົ້າໜ້າທີ່ທະບຽນຄອບຄົວ ຫຼື ພະນັກງານອື່ນຂອງອົງການທະບຽນຄອບຄົວ;

2. ຍຸຍົງຜູ້ອື່ນ ບໍ່ໃຫ້ໄປຈົດທະບຽນຄອບຄົວນຳອົງການທະບຽນຄອບຄົວ;

3. ເປັນສື່ກາງໃນການໃຫ້ ແລະ ຮັບສິນບົນ ແກ່ເຈົ້າໜ້າທີ່ທະບຽນຄອບຄົວ ຫຼື ພະນັກງານອື່ນຂອງອົງການທະບຽນຄອບຄົວ;

4. ສົມຮູ້ຮ່ວມຄິດໃນການປອມແປງເອກະສານ ຫຼື ໃຫ້ຂໍ້ມູນທີ່ບໍ່ຖືກຕ້ອງ ກ່ຽວກັບການຈົດທະບຽນຄອບຄົວ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ພາກທີ V
## ການຄຸ້ມຄອງ ແລະ ການກວດກາວຽກງານທະບຽນຄອບຄົວ
### ໝວດທີ 1
### ການຄຸ້ມຄອງວຽກງານທະບຽນຄອບຄົວ

**ມາດຕາ 56 (ປັບປຸງ) ອົງການຄຸ້ມຄອງວຽກງານທະບຽນຄອບຄົວ**

ລັດຖະບານ ເປັນຜູ້ຄຸ້ມຄອງວຽກງານທະບຽນຄອບຄົວ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງພາຍໃນ, ກະຊວງປ້ອງກັນຄວາມສະຫງົບ, ກະຊວງຍຸຕິທຳ ແລະ ກະຊວງການຕ່າງປະເທດ ເປັນເຈົ້າການ ປະສານສົມທົບຊຶ່ງກັນ ແລະ ກັນ ແລະ ກັບກະຊວງ, ອົງການອື່ນ, ສານປະຊາຊົນ, ອົງການໄອຍະການປະຊາຊົນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານທະບຽນຄອບຄົວ ປະກອບດ້ວຍ:

1. ຂະແໜງການພາຍໃນ;
2. ຂະແໜງການປ້ອງກັນຄວາມສະຫງົບ;
3. ຂະແໜງການຍຸຕິທຳ;
4. ກະຊວງການການຕ່າງປະເທດ.

**ມາດຕາ 57 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຂະແໜງການພາຍໃນ**

ໃນການຄຸ້ມຄອງວຽກງານທະບຽນຄອບຄົວ ຂະແໜງການພາຍໃນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ ສ້າງນະໂຍບາຍ, ຍຸດທະສາດ ແລະ ກົດໝາຍກ່ຽວກັບວຽກງານທະບຽນຄອບຄົວ ເພື່ອສະເໜີຂັ້ນເທິງພິຈາລະນາ;
2. ໂຄສະນາ, ເຜີຍແຜ່ ແລະ ສຶກສາອົບຮົມນະໂຍບາຍ, ຍຸດທະສາດ ແລະ ກົດໝາຍກ່ຽວກັບວຽກງານທະບຽນຄອບຄົວ;
3. ອອກລະບຽບການຄຸ້ມຄອງກ່ຽວກັບການຈົດທະບຽນການເກີດ, ການແຕ່ງດອງ, ການຢ່າຮ້າງ, ການເສຍຊີວິດ, ການປ່ຽນ ຊື່ ຫຼື ນາມສະກຸນ, ການປ່ຽນສັນຊາດ ແລະ ການຍົກຍ້າຍ;
4. ຊີ້ນຳ, ຄຸ້ມຄອງສາຍຕັ້ງຂອງຕົນ ໃນການຈັດຕັ້ງປະຕິບັດວຽກງານຈົດທະບຽນການເກີດ, ການແຕ່ງດອງ, ການຢ່າຮ້າງ, ການເສຍຊີວິດ, ການປ່ຽນຊື່ ຫຼື ນາມສະກຸນ, ການປ່ຽນສັນຊາດ ແລະ ການຍົກຍ້າຍ;
5. ປ່ຽນແປງ ຫຼື ລຶບລ້າງການຈົດທະບຽນທີ່ບໍ່ຖືກຕ້ອງກ່ຽວກັບການເກີດ, ການແຕ່ງດອງ, ການຢ່າຮ້າງ, ການເສຍຊີວິດ, ການປ່ຽນ ຊື່ ຫຼື ນາມສະກຸນ, ການປ່ຽນສັນຊາດ ແລະ ການຍົກຍ້າຍ;
6. ສ້າງ, ຄຸ້ມຄອງຖານຂໍ້ມູນທະບຽນຄອບຄົວ ແລະ ສະຖິຕິພົນລະເມືອງ;
7. ສະໜອງຂໍ້ມູນ ແລະ ເອກະສານທີ່ຈຳເປັນກ່ຽວກັບວຽກງານທະບຽນຄອບຄົວ ໃນກໍລະນີທີ່ພາກສ່ວນອື່ນສະເໜີມາ;
8. ປະສານສົມທົບກັບພາກສ່ວນອື່ນກ່ຽວກັບວຽກງານທະບຽນຄອບຄົວ;
9. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນກ່ຽວກັບວຽກງານທະບຽນຄອບຄົວຕາມຂອບເຂດສິດຂອງຕົນ ຫຼື ຕາມການມອບໝາຍຂອງຂັ້ນເທິງ;
10. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານທະບຽນຄອບຄົວ ໃຫ້ຂັ້ນເທິງຢ່າງເປັນປົກກະຕິ;
11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 58 (ປັບປຸງ) ສິດ ແລະ ໜ້າທີ່ຂອງຂະແໜງການປ້ອງກັນຄວາມສະຫງົບ**

ໃນການຄຸ້ມຄອງວຽກງານທະບຽນຄອບຄົວ ຂະແໜງການປ້ອງກັນຄວາມສະຫງົບ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ ສະເໜີສ້າງ, ປັບປຸງນະໂຍບາຍ, ຍຸດທະສາດ ແລະ ກົດໝາຍກ່ຽວກັບການຈົດທະບຽນສຳມະໂນຄົວ, ບັດປະຈຳຕົວ ແລະ ການພັກເຊົາຊົ່ວຄາວ;

2. ໂຄສະນາ ເຜີຍແຜ່ ແລະ ສຶກສາອົບຮົມນະໂຍບາຍ, ຍຸດທະສາດ ແລະ ກົດໝາຍກ່ຽວກັບວຽກງານທະບຽນຄອບຄົວ;

3. ຊີ້ນໍາ, ຄຸ້ມຄອງສາຍຕັ້ງຂອງຕົນ ໃນການຈັດຕັ້ງປະຕິບັດການຈົດທະບຽນສໍາມະໂນຄົວ, ບັດປະຈໍາຕົວ ແລະ ການພັກເຊົາຊົ່ວຄາວ;

4. ອອກລະບຽບການຄຸ້ມຄອງການຍົກຍ້າຍ, ການຈົດທະບຽນສໍາມະໂນຄົວ, ບັດປະຈໍາຕົວ ແລະ ການພັກເຊົາຊົ່ວຄາວ;

5. ອອກປຶ້ມສໍາມະໂນຄົວ, ບັດປະຈໍາຕົວ, ໃບອະນຸຍາດພັກເຊົາຊົ່ວຄາວ ແລະ ຄົ້ນຄວ້າການຂໍຍົກຍ້າຍ;

6. ປ່ຽນແປງ ຫຼື ລົບລ້າງການຈົດທະບຽນສໍາມະໂນຄົວ, ປຶ້ມສໍາມະໂນຄົວ, ການອອກບັດປະຈໍາຕົວ ແລະ ການອະນຸຍາດພັກເຊົາຊົ່ວຄາວ ທີ່ບໍ່ຖືກຕ້ອງ;

7. ສະໜອງເອກະສານ ແລະ ຂໍ້ມູນ ທີ່ຈໍາເປັນ ກ່ຽວກັບວຽກງານທະບຽນຄອບຄົວ ໃນກໍລະນີພາກສ່ວນອື່ນສະເໜີມາ;

8. ຄຸ້ມຄອງຖານຂໍ້ມູນທະບຽນຄອບຄົວ;

9. ປະສານສົມທົບກັບພາກສ່ວນອື່ນ ກ່ຽວກັບວຽກງານທະບຽນຄອບຄົວ;

10. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານທະບຽນຄອບຄົວ ຕາມຂອບເຂດສິດຂອງຕົນ ຫຼື ຕາມການມອບໝາຍຂອງຂັ້ນເທິງ;

11. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານທະບຽນຄອບຄົວ ໃຫ້ຂັ້ນເທິງຢ່າງເປັນປົກກະຕິ;

12. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 59 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຂະແໜງການຍຸຕິທໍາ**

ໃນການຄຸ້ມຄອງວຽກງານທະບຽນຄອບຄົວ ຂະແໜງການຍຸຕິທໍາ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ ສະເໜີ ສ້າງ, ປັບປຸງ ນະໂຍບາຍ, ຍຸດທະສາດ ແລະ ກົດໝາຍ ກ່ຽວກັບການຈົດທະບຽນ ການຫາຍສາບສູນ, ການເອົາເດັກເປັນລູກລ້ຽງ, ການແຕ່ງຕັ້ງຜູ້ປົກຄອງ, ການຮັບຮູ້ການເປັນ ພໍ່ ຫຼື ແມ່;

2. ໂຄສະນາ ເຜີຍແຜ່ ແລະ ສຶກສາອົບຮົມນະໂຍບາຍ, ຍຸດທະສາດ ແລະ ກົດໝາຍກ່ຽວກັບວຽກງານທະບຽນຄອບຄົວ;

3. ຊີ້ນໍາ, ຄຸ້ມຄອງສາຍຕັ້ງຂອງຕົນ ໃນການຈັດຕັ້ງປະຕິບັດການຈົດທະບຽນການຫາຍສາບສູນ, ການເອົາເດັກເປັນລູກລ້ຽງ, ການແຕ່ງຕັ້ງຜູ້ປົກຄອງ ແລະ ການຮັບຮູ້ການເປັນ ພໍ່ ຫຼື ແມ່;

4. ອອກລະບຽບການຄຸ້ມຄອງ ກ່ຽວກັບການຈົດທະບຽນ ການຫາຍສາບສູນ, ການເອົາເດັກເປັນລູກລ້ຽງ, ການແຕ່ງຕັ້ງຜູ້ປົກຄອງ ແລະ ການຮັບຮູ້ການເປັນ ພໍ່ ຫຼື ແມ່;

5. ປ່ຽນແປງ ຫຼື ລົບລ້າງການຈົດທະບຽນ ການຫາຍສາບສູນ, ການເອົາເດັກເປັນລູກລ້ຽງ, ການແຕ່ງຕັ້ງຜູ້ປົກຄອງ ແລະ ການຮັບຮູ້ການເປັນ ພໍ່ ຫຼື ແມ່ ທີ່ບໍ່ຖືກຕ້ອງ;

6. ສະໜອງເອກະສານ ແລະ ຂໍ້ມູນ ທີ່ຈໍາເປັນ ກ່ຽວກັບວຽກງານທະບຽນຄອບຄົວ ໃນກໍລະນີພາກສ່ວນອື່ນສະເໜີມາ;

7. ປະສານສົມທົບກັບພາກສ່ວນອື່ນກ່ຽວກັບວຽກງານທະບຽນຄອບຄົວ;

8. ພົວພັນ ແລະ ຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານທະບຽນຄອບຄົວ ຕາມຂອບເຂດສິດຂອງຕົນ ຫຼື ຕາມການມອບໝາຍຂອງຂັ້ນເທິງ;

9. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານທະບຽນຄອບຄົວ ໃຫ້ຂັ້ນເທິງຢ່າງເປັນປົກກະຕິ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 60 (ໃໝ່) ສິດ ແລະ ໜ້າທີ່ຂອງ ກະຊວງການຕ່າງປະເທດ**

ໃນການຄຸ້ມຄອງວຽກງານທະບຽນຄອບຄົວ ກະຊວງການຕ່າງປະເທດ ມີ ສິດ ແລະ ໜ້າທີ່ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບການຈົດທະບຽນຄອບຄົວ ຢູ່ຕ່າງປະເທດ;

2. ອອກລະບຽບການຄຸ້ມຄອງ ແລະ ຈັດຝຶກອົບຮົມ ກ່ຽວກັບວຽກງານທະບຽນຄອບຄົວ ໃຫ້ແກ່ພະນັກງານສຳນັກງານຜູ້ຕາງໜ້າ ຂອງ ສປປ ລາວ ຢູ່ຕ່າງປະເທດ ທີ່ຮັບຜິດຊອບວຽກງານທະບຽນຄອບຄົວ;

3. ຊີ້ນຳ, ຄຸ້ມຄອງການຈັດຕັ້ງປະຕິບັດວຽກງານທະບຽນຄອບຄົວ ຢູ່ຕ່າງປະເທດ;

4. ປ່ຽນແປງ ຫຼື ລົບລ້າງ ການຈົດທະບຽນຄອບຄົວ ຢູ່ຕ່າງປະເທດທີ່ບໍ່ຖືກຕ້ອງ;

5. ສະໜອງເອກະສານ ແລະ ຂໍ້ມູນ ທີ່ຈຳເປັນກ່ຽວກັບການຈົດທະບຽນຄອບຄົວ ຢູ່ຕ່າງປະເທດ ໃນກໍລະນີທີ່ພາກສ່ວນອື່ນສະເໜີມາ;

6. ປະສານສົມທົບກັບພາກສ່ວນອື່ນກ່ຽວກັບວຽກງານທະບຽນຄອບຄົວ;

7. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານທະບຽນຄອບຄົວ ໃຫ້ຂັ້ນເທິງຢ່າງເປັນປົກກະຕິ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 61 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ**

ໃນການຄຸ້ມຄອງວຽກງານທະບຽນຄອບຄົວ ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ມີ ສິດ ແລະ ໜ້າທີ່ ໃນການປະສານສົມທົບ ແລະ ຮ່ວມມືກັບຂະແໜງການພາຍໃນ, ຂະແໜງການປ້ອງກັນຄວາມສະຫງົບ, ຂະແໜງການຍຸຕິທຳ ແລະ ຂະແໜງການການຕ່າງປະເທດ ຕາມພາລະບົດບາດຂອງຕົນ.

## ໝວດທີ 2
## ການກວດກາວຽກງານທະບຽນຄອບຄົວ

**ມາດຕາ 62 (ປັບປຸງ) ອົງການກວດກາວຽກງານທະບຽນຄອບຄົວ**

ອົງການກວດກາວຽກງານທະບຽນຄອບຄົວ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນ ອົງການດຽວກັນກັບອົງການຄຸ້ມຄອງວຽກງານທະບຽນຄອບຄົວຕາມທີ່ໄດ້ກຳນົດໄວ້ໃນມາດຕາ 56 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາລັດແຕ່ລະຂັ້ນ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ.

**ມາດຕາ 63 (ປັບປຸງ) ເນື້ອໃນການກວດກາ**

ການກວດກາ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ກວດກາຄວາມຖືກຕ້ອງຂອງການຈົດທະບຽນ;

2. ກວດກາການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການທະບຽນຄອບຄົວ, ການຄຸ້ມຄອງ ແລະ ການນຳໃຊ້ລາຍຮັບ-ລາຍຈ່າຍກ່ຽວກັບການຈັດຕັ້ງປະຕິບັດວຽກງານທະບຽນຄອບຄົວ;

3. ກວດກາຄວາມຮັບຜິດຊອບ, ການປະພຶດ ແລະ ແບບແຜນວິທີເຮັດວຽກຂອງເຈົ້າໜ້າທີ່ທະບຽນຄອບຄົວ ແລະ ພະນັກງານອື່ນຂອງອົງການທະບຽນຄອບຄົວ.

**ມາດຕາ 64 ຮູບການການກວດກາ**

ການກວດກາ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາ ຕາມປົກກະຕິ;
2. ການກວດກາ ໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ;
3. ການກວດກາແບບກະທັນຫັນ.

ການກວດກາ ຕາມປົກກະຕິ ແມ່ນ ການກວດກາຕາມແຜນການ ແລະ ມີກຳນົດເວລາອັນແນ່ນອນ.

ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນ ການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ຜູ້ຖືກກວດກາຮູ້ກ່ອນລ່ວງໜ້າ.

ການກວດກາແບບກະທັນຫັນ ແມ່ນ ການກວດການອກແຜນການ ທີ່ຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ.

ການກວດກາ ໃຫ້ດຳເນີນທັງການກວດກາເອກະສານ ແລະ ລົງກວດກາຕົວຈິງ ຢູ່ສະຖານທີ່ປະຕິບັດງານ.

## ພາກທີ VI
## ງົບປະມານ ແລະ ຕາປະທັບ

**ມາດຕາ 65 (ປັບປຸງ) ງົບປະມານ**

ອົງການທະບຽນຄອບຄົວ ນຳໃຊ້ງົບປະມານຂອງລັດ ໂດຍແມ່ນຂະແໜງການພາຍໃນ, ຂະແໜງການປ້ອງກັນຄວາມສະຫງົບ, ຂະແໜງການຍຸຕິທຳ ແລະ ກະຊວງການຕ່າງປະເທດ ເປັນຜູ້ສ້າງແຜນງົບປະມານ ເພື່ອຮັບປະກັນການຈັດຕັ້ງປະຕິບັດວຽກງານທະບຽນຄອບຄົວ ໃຫ້ມີປະສິດທິຜົນ.

**ມາດຕາ 66 (ປັບປຸງ) ຕາປະທັບ**

ອົງການທະບຽນຄອບຄົວ ມີຕາປະທັບເປັນຂອງຕົນເອງ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ.

ຮູບແບບ ແລະ ເນື້ອໃນຕາປະທັບຂອງອົງການທະບຽນຄອບຄົວ ແຕ່ລະຂະແໜງການ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ພາກທີ VII
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 67 (ປັບປຸງ) ນະໂຍບາຍຕໍ່ຜູ້ຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ເປັນຕົ້ນ ການຈົດທະບຽນຄອບຄົວຢ່າງຖືກຕ້ອງ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 68 (ປັບປຸງ) ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ໄດ້ລະເມີດກົດໝາຍສະບັບນີ້ ເປັນຕົ້ນ ຂໍ້ຫ້າມຈະຖືກປະຕິບັດມາດຕະການສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທີ່ຕົນໄດ້ກໍ່ຂຶ້ນ ຫຼື ລົງໂທດທາງອາຍາ ຕາມແຕ່ກໍລະນີເບົາ ຫຼື ໜັກ.

## ພາກທີ VIII
## ບົດບັນຍັດສຸດທ້າຍ

**ມາດຕາ 69 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 70 (ປັບປຸງ) ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ພາຍຫຼັງໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍທະບຽນຄອບຄົວ ສະບັບເລກທີ 12/ສພຊ, ລົງວັນທີ 27 ພະຈິກ 2009.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້